# ຄຳນຳ

ເພື່ອໃຫ້ສອດຄ່ອງກັບການປະຕິຮູບການສຶກສາແຫ່ງຊາດ ແລະ ແຜນການພັດທະນາຄຸນນະພາບຂອງກົມສ້າງຄູ ດັ່ງນັ້ນ, ວິທະຍໄລຄູສະຫວັນນະເຂດໄດ້ຖືເອົາການປະກັນຄຸນນະພາບການສຶກສາຂອງສະຖາບັນ ເປັນວຽກງານທີ່ມີບົດບາດສຳຄັນໃນການກະຕຸກຊຸກຍູ້ວຽກງານຕ່າງໆຂອງສະຖາບັນໃຫ້ມີຄວາມເຂັ້ມແຂງ ແລະ ພັດທະນາຢ່າງຕໍ່ເນື່ອງ ເພື່ອຕອບສະໜອງກັບວຽກງານດັ່ງກ່າວ ວິທະຍາໄລຄູຈຶ່ງໄດ້ແຕ່ງຕັ້ງຄະນະຮັບຜິດຊອບການປະເມີນຄຸນນະພາບພາຍໃນສະຖາບັນຂຶ້ນ ເພື່ອກວດກາ, ເກັບກຳ, ລວບລວມຂໍ້ມູນຈາກໜ່ວຍງານ, ຫ້ອງການ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອສະໜອງໃຫ້ແກ່ການປະເມີນຄຸນນະພາບດັ່ງກ່າວ.

ສຳລັບການປະເມີນຄຸນນະພາບພາຍໃນຄັ້ງນີ້ ວິທະຍາໄລຄູສະຫວັນນະເຂດ ໄດ້ມີການປະຕິບັດ ແລະ ເອົາໃຈໃສ່ຕໍ່ກັບວຽກການປະເມີນຄຸນນະພາບພາຍໃນເປັນຢ່າງດີ ເຊິ່ງໄດ້ຮັບການແນະນຳຈາກພະແນກປະເມີນຜົນຂອງກົມສ້າງຄູທີ່ໄດ້ຕິດຕາມ, ກວດກາ, ຊຸກຍູ້ຂະບວນການປະເມີນຜົນພາຍໃນຢ່າງຕໍ່ເນື່ອງ, ພ້ອມນັ້ນຍັງໄດ້ຮັບການຊີ້ນຳເປັນຢ່າງດີຈາກຄະນະອຳນວຍການ ແລະ ການຮ່ວມມືຈາກຄະນະຫ້ອງການ, ຄະນະໜ່ວຍງານ ແລະ ອົງການຈັດຕັ້ງມະຫາຊົນ ພາຍໃນວິທະຍາໄລຄູສະຫວັນນະເຂດ.

ເຖິງວ່າບົດສັງລວມການກວດກາຄຸນນະພາບໃນຈະເປັນບົດທີ່ສົມບູນແລ້ວກໍຕາມ ແຕ່ກໍຍັງບໍ່ສາມາດປາສະຈາກໄດ້ເຖິງຄວາມຂາດຕົກບົກຜ່ອງທາງດ້ານເນື້ອໃນ ແລະ ການຈັດພິມ ສະນັ້ນ, ຈິ່ງຮຽກຮ້ອງມາຍັງທ່ານຜູ້ທີ່ໄດ້ສຶກສາ ແລະ ອ່ານບົດສັງລວມການກວດກາຄຸນນະພາບໃນສະບັບນີ້ ຊ່ວຍມີຄຳເຫັນເພື່ອປັບປຸງເຮັດໃຫ້ເນື້ອໃນການປະເມີນຜົນຄັ້ງນີ້ສົມບູນ ແລະ ສອດຄ່ອງກັບຄວາມເປັນຈິງຂຶ້ນກວ່າເກົ່າ.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນ ທີ່ໄດ້ເຂົ້າຮ່ວມປະເມີນຜົນຄຸນນະພາບພາຍໃນຂອງວິທະຍາໄລຄູສະຫວັນນະເຂດ ໂດຍສະເພາະແມ່ນທຸກໆຄຳເຫັນ ແລະ ຂໍ້ສະເໜີແນະຕ່າງໆທີ່ເປັນປະໂຫຍດໃນການປັບປຸງບົດສັງລວມການປະເມີນຄຸນນະພາບພາຍໃນວິທະຍາໄລຄູຄັ້ງນີ້ ຈົນເຮັດໃຫ້ບົດດັ່ງກ່າວສາເລັດຜົນລົງໂດຍດີ.

ຄະນະຮັບຜິດຊອບການປະເມີນຄຸນນະພາບພາຍໃນ

# ສາລະບານ

I. ບົດສະຫຼຸບຜົນການກວດກາຄຸນນະພາບພາຍໃນ (ສະຫຼຸບຕາມມາດຕະຖານ ແລະ ຕົວຊີ້ບອກ)........................2
ມາດຕະຖານທີ 1: ວິໄສທັດ, ພາລະກິດ ແລະ ເປົ້າໝາຍ ........................................................................2
ມາດຕະຖານທີ 2: ການຄຸ້ມຄອງ ແລະ ບໍລິຫານ...............................................................................3
ມາດຕະຖານທີ 3: ການພັດທະນາບຸກຄະລາກອນ.............................................................................3
ມາດຕະຖານທີ 4: ຫຼັກສູດ..................................................................................................4
ມາດຕະຖານທີ 5: ປະສິດທິຜົນຂອງການສອນ-ການຮຽນຮູ້ ...............................................................4
ມາດຕະຖານທີ 6: ການສົ່ງເສີມນັກຮຽນ-ນັກສຶກສາ ........................................................................5
ມາດຕະຖານທີ 7: ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້ ..............................................................5
ມາດຕະຖານທີ 8: ລະບົບຂໍ້ມູນຂ່າວສານ.....................................................................................6
ມາດຕະຖານທີ 9: ການປະກັນຄຸນນະພາບພາຍໃນ .........................................................................7
ມາດຕະຖານທີ 10: ການຄົ້ນຄວ້າວິທະຍາສາດ ແລະ ສິ່ງພິມ...............................................................7
II. ຈຸດອ່ອນ-ຂໍ້ຄົງຄ້າງ, ສາເຫດທີ່ພາໃຫ້ມີຈຸດອ່ອນ-ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ............................................7
III. ຕີລາຄາລວມ ..........................................................................................................8
IV. ຖອດຖອນບົດຮຽນ ....................................................................................................8
V. ຂໍ້ສະເໜີຕ່າງໆ ........................................................................................................8
ການລົງຄວາມເຫັນກ່ຽວກັບການກວດກາຄຸນນະພາບພາຍໃນ ..........................................................9
ເອກະສານອ້າງອີງ...........................................................................................................10

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສະຫວັນນະເຂດ

ເລກທີ 463 _-[illegible] /ວຄສ/2016

ລົງວັນທີ 25 JUL 2016

## ບົດສັງລວມຫຍໍ້

## ການປະເມີນຜົນຄຸນນະພາບພາຍໃນສະຖາບັນສ້າງຄູ

- ຄະນະປະເມີນຜົນພາຍໃນ ວິທະຍາໄລຄູ ສະຫວັນນະເຂດ ປະກອບມີ:

| | | |
|---|---|---|
| 1. | ທ່ານ ລັດສະໝີ ພະໄຊສີ | ຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ |
| 2. | ທ່ານ ພົມມະສອນ ວໍລະບຸດ | ຮອງຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ |
| 3. | ທ່ານ ນາງ ໃສຊົມຊື່ນ ໂພທິສານ | ຮອງຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ, ສະຫະພັນແມ່ຍິງ |
| 4. | ທ່ານ ບໍລົມ ເກດຕະວົງ | ຫົວໜ້າຫ້ອງການວັດຜົນ-ປະເມີນຜົນ |
| 5. | ທ່ານ ພົມມາ ໄຊຍະວົງ | ຫົວໜ້າຫ້ອງການບໍລິຫານ |
| 6. | ທ່ານ ສອນແກ້ວ ອຸ່ນປະເສີດ | ຫົວໜ້າຫ້ອງການຈັດຕັ້ງ-ພະນັກງານ |
| 7. | ທ່ານ ອຳພອນ ຂາວເພຍສຸພົມ | ຫົວໜ້າຫ້ອງການສົ່ງເສີມວິຊາການ |
| 8. | ທ່ານ ນາງ ແກ້ວລຳຂວັນ ພັກດີວິຈິດ | ຫົວໜ້າຫ້ອງການພັດທະນາຄູ |
| 9. | ທ່ານ ໂພໄຊ ພິລາວົງ | ຫົວໜ້າຫ້ອງການກິດຈະການນັກສຶກສາ, ສະຫະພັນກຳມະບານ |
| 10. | ທ່ານ ສົມພົງ ສີຈັນທອງທິບ | ຫົວໜ້າຫ້ອງການວິທະຍາສາດທຳມະຊາດ |
| 11. | ທ່ານ ນາງ ຈັນສຸດາ ຈັນທິວົງ | ຫົວໜ້າຫ້ອງການວິທະຍາສາດສັງຄົມ |
| 12. | ທ່ານ ເຫວດ ມີນທາທິລາດ | ຫົວໜ້າຫ້ອງການອະນຸບານ-ປະຖົມ |
| 13. | ທ່ານ ສຸດສາຄອນ ໄຊສິດທິເດດ | ຮອງຫົວໜ້າຫ້ອງການວັດຜົນ-ປະເມີນຜົນ |
| 14. | ທ່ານ ຄຳໄຫວ ຫຼວງສະລາດ | ຮອງຫົວໜ້າຫ້ອງການບໍລິຫານ |
| 15. | ທ່ານ ບຸນເລີດ ຈັນດີນຸພາບ | ຮອງຫົວໜ້າຫ້ອງການວິທະຍາສາດທຳມະຊາດ |
| 16. | ທ່ານ ບົວໃສ ລາດຊະກຸນໄທ | ຮອງຫົວໜ້າຫ້ອງການຈັດຕັ້ງ-ພະນັກງານ |
| 17. | ທ່ານ ວົງເພັດ ວົງສະດາລັດ | ຮອງຫົວໜ້າຫ້ອງການກິດຈະການນັກສຶກສາ |
| 18. | ທ່ານ ກະຕິກາ ຣາຊະບຸຕຣ໌ | ຮອງຫົວໜ້າຫ້ອງການພັດທະນາຄູ |
| 19. | ທ່ານ ໄພລັດ ສີທອງ | ຮອງຫົວໜ້າຫ້ອງການສົ່ງເສີມວິຊາການ |
| 20. | ທ່ານ ສີຫານຸລາດ ທານະຂັນຕີ | ຮອງຫົວໜ້າຫ້ອງການສົ່ງເສີມວິຊາການ |
| 21. | ທ່ານ ນາງ ສຸກັນ ໄຊຍະເພັດ | ຮອງຫົວໜ້າຫ້ອງການວິທະຍາສາດສັງຄົມ |
| 22. | ທ່ານ ຄຳປະສົງ ຄູນມີໄຊ | ຮອງຫົວໜ້າຫ້ອງການພາສາຕ່າງປະເທດ |
| 23. | ທ່ານ ນາງ ບຸນ ແກ້ວແສນໄຊ | ຮອງຫົວໜ້າຫ້ອງການອະນຸບານ-ປະຖົມ |
| 24. | ທ່ານ ນາງ ແກ້ວວົງວອນ ຈັນທະລັງສີ | ຕາງໜ້າອົງການຈັດຕັ້ງຊາວໜຸ່ມ |

# ບົດສັງລວມຫຍໍ້ຜົນການກວດກາຄຸນນະພາບພາຍໃນ

ເພື່ອປະຕິບັດຕາມແຜນພັດທະນາຄຸນນະພາບການສຶກສາຂອງກົມສ້າງຄູ ກໍຄືກະຊວງສຶກສາທິການ ແລະ ກິລາວາງອອກໃຫ້ປະກົດຜົນເປັນຈິງເທື່ອລະກ້າວ, ໄປຄຽງຄູ່ກັບການປະຕິບັດແຜນພັດທະນາປະຈຳປີແລ້ວ ວິທະຍາໄລຄູສະຫວັນນະເຂດ ຍັງໄດ້ຖືເອົາວຽກງານການປະເມີນຄຸນນະພາບພາຍໃນຂອງສະຖາບັນເປັນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນ ເນື່ອງຈາກວ່າວຽກງານດັ່ງກ່າວເປັນການກວດກາຄືນການປະຕິບັດແຜນພັດທະນາໃນແຕ່ລະປີ ທັງຍັງເປັນການກະຕຸກຊຸກຍູ້ວຽກງານຕ່າງໆໃນສະຖາບັນໃຫ້ມີການພັດທະນາຢ່າງຮອບດ້ານ. ດັ່ງນັ້ນ ວິທະຍາໄລຄູສະຫວັນນະເຂດ ກໍໄດ້ເອົາໃຈໃສ່ຕໍ່ກັບວຽກງານນີ້ຢ່າງຈິງຈັງ ເຊິ່ງໄດ້ມອບໝາຍໃຫ້ຫ້ອງການວັດຜົນ-ປະເມີນຜົນເປັນຜູ້ຮັບຜິດຊອບດຳເນີນການປະເມີນຜົນຄຸນນະພາບພາຍໃນ ໂດຍສົມທົບກັບທຸກໆພາກສ່ວນທີ່ກ່ຽວຂ້ອງພາຍໃນສະຖາບັນ ພາຍໃຕ້ການຊີ້ນຳຂອງຄະນະພັກ, ຄະນະອຳນວຍການ.

ສຳລັບການປະຕິວັດວຽກການປະເມີນຜົນພາຍໃນ ໃນຄັ້ງນີ້ ການຈັດຕັ້ງປະຕິບັດແມ່ນໄດ້ດຳເນີນການ ຕາມການແນະນຳຂອງກົມສ້າງຄູ, ຄະນະອຳນວຍການ ແລະ ເອກະສານຄູ່ມືການປະເມີນຄຸນນະພາບພາຍໃນ ດັ່ງນັ້ນ ຄະນະຫ້ອງການວັດ-ປະເມີນຜົນຈຶ່ງໄດ້ວາງແຜນໃນການດຳເນີນງານ ມີຂະບວນການດຳເນີນຕາມຂັ້ນຕອນຄື: ແຕ່ງຕັ້ງຄະນະປະເມີນຜົນພາຍໃນວິທະຍາໄລຄູ ປະກອບດ້ວຍຄະນະຊີ້ນຳລວມ, ຄະນະຫ້ອງການ 10 ຫ້ອງການ, ຜູ້ຮັບຜິດຊອບພາຍໃນຫ້ອງການວັດ-ປະເມີນຜົນ ແລະ ຕາງໜ້າອົງການຈັດຕັ້ງມະຫາຊົນ ຈາກນັ້ນເຜີຍແຜ່ເອກະສານຄູ່ມື ລວມທັງແຜນການດຳເນີນ ຂອງວຽກງານການປະເມີນຜົນພາຍໃນ 10 ມາດຕະຖານ ແລະ 50 ຕົວຊີ້ວັດ ໃຫ້ແຕ່ລະພາກສ່ວນ ເພື່ອທຳຄວາມເຂົ້າໃຈກ່ຽວກັບບັນດາເນື້ອໃນຂອງມາດຕະຖານ ແລະ ຕົວຊີ້ວັດຕ່າງໆ. ຈາກນັ້ນໄດ້ຈັດກອງປະຊຸມເພື່ອດຳເນີນການກວດກາ ແລະ ເປັນເອກະພາບກັນຕີລາຄາໃຫ້ຄະແນນຕາມຄວາມເໝາະສົມທີ່ສະຖາບັນປະຕິບັດໄດ້ຕາມຄວາມເປັນຈິງ ແລ້ວມອບໝາຍໃຫ້ແຕ່ລະຫ້ອງການ ປະກອບຫຼັກຖານທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ສົ່ງໃຫ້ຄະນະຮັບຜິດຊອບຫ້ອງການວັດຜົນ-ປະເມີນຜົນເປັນຜູ້ສັງລວມ ແລ້ວຂຽນເປັນບົດສະຫຼຸບລາຍງານພາຍໃນສະຖາບັນ ແລະ ຫຼັງຈາກນັ້ນກໍສົ່ງລາຍງານໃຫ້ຂັ້ນເທິງ (ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ).

ໃນການປະເມີນຜົນຄຸນນະພາບພາຍໃນຄັ້ງນີ້ໄດ້ເລັ່ງໃສ່ກວດກາໃນ 10 ມາດຕະຖານ ແລະ 50 ຕົວຊີ້ວັດ, ຜ່ານການກວດກາເຫັນໄດ້ວ່າ: ວິທະຍາໄລຄູຂອງພວກຂ້າພະເຈົ້າຈັດຢູ່ໃນລະດັບດີ ເຊິ່ງມີຄະແນນເທົ່າກັບ 4,37 ຄິດເປັນເປີເຊັນເທົ່າ 87,38%. ບັນຫາທີ່ເຫັນວ່າເດັ່ນກວ່າໝູ່ ແມ່ນມາດຕະຖານທີ V ປະສິດທິຜົນຂອງການຮຽນ-ການສອນ ໄດ້ຄະແນນສະເລ່ຍເທົ່າ 5 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີຫຼາຍ, ທັງນີ້ກໍເນື່ອງຈາກວ່າທາງສະຖາບັນໄດ້ມີກົນໄກຕິດຕາມການຮຽນ-ການສອນ ແລະ ຮັບຟັງຄຳຄິດຄຳເຫັນຈາກພາກສ່ວນຕ່າງໆກ່ຽວກັບປະສິດທິຜົນຂອງການຮຽນ-ການສອນເປັນຢ່າງດີ, ມີການນຳໃຊ້ເຕັກໂນໂລຊີ, ສື່ຕ່າງໆ ແລະ ດຳເນີນການຮຽນ-ການສອນແບບເອົານັກສຶກສາເປັນໃຈກາງ ທັງມີການຈັດສັນສະຖານທີ່ການລົງເຝິກງານຂອງນັກສຶກສາຢ່າງເໝາະສົມ ແລະ ພຽງພໍ.

ບັນຫາທີ່ເດັ່ນຖັດລົງມາ ແມ່ນມາດຕະຖານທີ VIII ລະບົບຂໍ້ມູນຂ່າວສານພາຍໃນສະຖາບັນ, ມາດຕະຖານທີ X ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ ແລະ ມາດຕະຖານທີ VII ເຊິ່ງມີຄະແນນສະເລ່ຍເທົ່າ 4,67 ແລະ 4,50 ຕາມລຳດັບ ເຊິ່ງຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີ ຫາ ດີຫຼາຍ; ຍ້ອນວ່າສະຖາບັນໄດ້ມີລະບົບຂໍ້ມູນຂ່າວສານເພື່ອບໍລິຫານ ແລະ ຄຸ້ມຄອງສະຖາບັນທີ່ມີປະສິດທິພາບ, ທັນສະພາບການ ຮັບປະກັນຄວາມປອດໄພ; ມີນະໂຍບາຍ ແລະ ລະບຽບການທີ່ສົ່ງເສີມໃຫ້ຄູອາຈານ ແລະ ນັກສຶກສາດຳເນີນການຄົ້ນຄວ້າວິໄຈ, ໃຫ້ບໍລິການດ້ານວິຊາການແກ່ພາຍໃນ ແລະ ສະຖາບັນຕ່າງໆ ພ້ອມທັງໄດ້ມີການເຜີຍແຜ່ຜົນງານການຄົ້ນຄວ້າດັ່ງກ່າວອີກດ້ວຍ. ນອກຈາກນີ້ ສະຖາບັນຍັງມີສິ່ງອຳນວຍຄວາມສະດວກສຳລັບການຮຽນ-ການສອນທີ່ພຽງພໍເຊັ່ນ: ອາຄານຮຽນ, ຫ້ອງການ, ຫ້ອງປະຊຸມ, ສະໂມສອນ, ຫ້ອງສະໝຸດ, ຫ້ອງຄອມພິວເຕີທີ່ສາມາດຮອງ

ຮັບນັກສຶກສາເຂົ້າຮຽນໄດ້ພຽງພໍ ແລະ ມີຫ້ອງທົດລອງວິທະຍາສາດທີ່ຄົບຊຸດ. ບັນຫາທີ່ຈັດຢູ່ໃນລະດັບດີແມ່ນມາດຕະຖານທີ VI ການສົ່ງເສີມນັກຮຽນ/ນັກສຶກສາ, ມາດຕະຖານທີ IX ລະບົບການປະກັນຄຸນນະພາບພາຍໃນ, ມາດຕະຖານທີ IV ຫຼັກສູດ, ມາດຕະຖານທີ II ການຄຸ້ມຄອງ ແລະ ການບໍລິຫານ ແລະ ມາດຕະຖານທີ III ການພັດທະນາບຸກຄະລາກອນ ຕາມລຳດັບ ເພາະວ່າສະຖາບັນຂອງພວກເຮົາ ເຖິງວ່າປະຕິບັດໄດ້ຕາມມາດຖານກໍຈິງແຕ່ເຫັນວ່າຍັງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ ຍັງປະຕິບັດຢູ່ໄດ້ໃນລະດັບໃດໜຶ່ງເທົ່ານັ້ນ ເຊິ່ງຍັງຈະຕ້ອງໄດ້ບຸກບືນ, ສູ້ຊົນຕື່ມໃນປີຕໍ່ໄປເພື່ອໃຫ້ໄດ້ຕາມມາດຕະຖານ ຄາດໝາຍທີ່ວາງໄວ້ ແລະ ບັນຫາທີ່ໄດ້ຄະແນນສະເລ່ຍໜ້ອຍກວ່າໝູ່ແມ່ນມາດຕະຖານທີ I ວິໄສທັດ, ພາລະກິດ ແລະ ເປົ້າໝາຍ ມີຄະແນນຢູ່ໃນລະດັບປານກາງ ເທົ່າກັບ 3.67 ຄະແນນ ເນື່ອງຈາກວ່າສະຖາບັນໄດ້ກຳນົດວິໄສທັດ, ພາລະກິດ ແລະ ເປົ້າໝາຍຂຶ້ນຢ່າງຈະແຈ້ງກໍຈິງ ແຕ່ການເຜີຍແຜ່ໃຫ້ແກ່ຜູ້ທີ່ກ່ຽວຂ້ອງທັງຫຼາຍ ໂດຍສະເພາະແມ່ນພະນັກງານ-ຄູອາຈານ ແລະ ນັກຮຽນ-ນັກສຶກສາຄູ ຕະຫຼອດຮອດຜູ້ປົກຄອງ/ພໍ່ແມ່ນັກຮຽນ-ນັກສຶກສາຄູ ຍັງຢູ່ໃນຂອບເຂດຈຳກັດ ບໍ່ກວ້າງຂວາງ ແລະ ທົ່ວເຖິງເທົ່າທີ່ຄວນ, ມີພຽງແຕ່ໂຄສະນາຢູ່ພາຍໃນສະຖາບັນເທົ່ານັ້ນ ເຊິ່ງບັນຫານີ້ ໃນຕໍ່ໜ້າທາງສະຖາບັນຈະຕ້ອງໄດ້ເພີ່ມທະວີວຽກງານໂຄສະນາໃຫ້ທົ່ວເຖິງ ແລະ ກວ້າງຂວາງກວ່າເກົ່າ ເຊັ່ນ: ໂຄສະນາຜ່ານປຶ້ມລາຍງານຂອງສະຖາບັນ, ໂປສະເຕີ, ເວບໄຊ ແລະ ສື່ອື່ນໆ...

ໃນການປະເມີນຜົນຄັ້ງນີ້ທາງສະຖາບັນໄດ້ມີຄວາມເອົາໃຈໃສ່ ແລະ ໄດ້ຮັບການຮ່ວມມືຈາກທຸກໆພາກສ່ວນທີ່ກ່ຽວຂ້ອງໃນແຕ່ລະຂັ້ນ ເຊິ່ງໄດ້ຮັບຄຳແນະນຳຈາກກົມສ້າງຄູ, ຄະນະອຳນວຍການ ແລະ ຄະນະຫ້ອງການພາຍໃນສະຖາບັນ ພ້ອມດ້ວຍໜ່ວຍງານຮັບຜິດຊອບທີ່ກ່ຽວຂ້ອງ ໂດຍສະເພາະຫ້ອງການວັດຜົນ-ປະເມີນຜົນ ເຊິ່ງໄດ້ປະຕິບັດຕາມຂັ້ນຕອນ ລວມເຖິງການປະກອບຫຼັກຖານໃຫ້ສອດຄ່ອງກັບບັນດາຕົວຊີ້ວັດໃນການປະເມີນຄຸນນະພາບພາຍໃນສະບັບນີ້ສຳເລັດ ແລະ ຄົບຖ້ວນ.

ວິທະຍາໄລຄູສະຫວັນນະເຂດໄດ້ກຳນົດເອົາລະບົບຮັບປະກັນຄຸນນະພາບ ເຂົ້າໃນແຜນການປະຈຳປີຂອງສົກຮຽນ 2015-2016, ໂດຍມອບໃຫ້ຫ້ອງການວັດຜົນ-ປະເມີນຜົນເປັນຜູ້ຈັດຕັ້ງປະຕິບັດ ເຊິ່ງສາມາດສັງລວມຫຍໍ້ຜົນການກວດກາຄຸນນະພາບໄດ້ດັ່ງນີ້:

## I. ບົດສະຫຼຸບຜົນການກວດກາຄຸນນະພາບພາຍໃນ (ສະຫຼຸບຕາມມາດຕະຖານ ແລະ ຕົວຊີ້ບອກ)

## ມາດຕະຖານທີ 1: ວິໄສທັດ, ພາລະກິດ ແລະ ເປົ້າໝາຍ

ໃນມາດຕະຖານທີ 1 ປະກອບດ້ວຍ 3 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າກັບ 3.67 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບປານກາງ ຫາ ດີ, ເຊິ່ງໃນນີ້ຄະແນນສູງກວ່າໝູ່ແມ່ນຕົວຊີ້ວັດທີ 1: ວິໄສທັດ, ເປົ້າໝາຍ, ພາລະກິດ ແລະ ການກໍ່ສ້າງຖືກກຳນົດຢ່າງຈະແຈ້ງ ແລະ ທຸກພາກສ່ວນໄດ້ຮັບຮູ້ ແລະ ຕົວຊີ້ວັດທີ 3: ວິໄສທັດ, ພາລະໜ້າທີ່ ແລະ ຈຸດໝາຍການກໍ່ສ້າງໄດ້ຮັບການທົບທວນ ແລະປັບປຸງເປັນແຕ່ລະໄລຍະ ເຊິ່ງທັງສອງຕົວຊີ້ວັດໄດ້ຄະແນນເທົ່າ 4 ເຫັນວ່າຢູ່ໃນລະດັບດີ ເນື່ອງຈາກວ່າວິທະຍາໄລຄູ ໄດ້ກຳນົດວິໄສທັດຂຶ້ນຢ່າງຈະແຈ້ງ ແລະ ໄດ້ເຜີຍແຜ່ໃຫ້ແກ່ຜູ້ທີ່ກ່ຽວຂ້ອງໂດຍສະເພາະແມ່ນຄູ-ອາຈານ ພະນັກງານ ແລະ ນັກຮຽນ-ນັກສຶກສາຄູໄດ້ຮັບຮູ້ ທັງມີການທົບທວນ ແລະ ປັບປຸງແກ້ໄຂໃຫ້ແທດເໝາະກັບສະພາບການໃນແຕ່ລະໄລຍະ, ແຕ່ການເຜີຍແຜ່ຍັງບໍ່ກວ້າງຂວາງເທົ່າທີ່ຄວນໂດຍສະເພາະການໂຄສະນາຜ່ານສື່ຕ່າງໆ. ສ່ວນຕົວຊີ້ວັດທີ 2: ຈຸດໝາຍກໍ່ສ້າງສອດຄ່ອງກັບພາລະໜ້າທີ່ , ແທດເໝາະກັບທ່າແຮງ ແລະ ທິດທາງການພັດທະນາຂອງສະຖາບັນ, ຕອບສະໜອງໄດ້ຕໍ່ຄວາມຮຽກຮ້ອງຕ້ອງການໃນການພັດທະນາຂອງປະເທດ, ທ້ອງຖິ່ນ, ການເຊື່ອມໂຍງກັບພາກພື້ນ ແລະ ການພັດທະນາດ້ານວິຊາການຂອງຂະແໜງການ ເຫັນວ່າຢູ່ໃນລະດັບປານກາງ ມີຄະແນນເທົ່າ 3 ເນື່ອງຈາກວ່າໄດ້ກຳນົດເປົ້າໝາຍສອດຄ່ອງກັບພາລະບົດບາດ, ຄວາມສາມາດທີ່ບົ່ມຊ້ອນຢູ່ພາຍໃນ ເພື່ອບັນລຸຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາຢູ່ແຕ່ວ່າຂອດການປະຕິບັດຍັງມີລັກສະນະຈຳກັດ.

## ມາດຕະຖານທີ 2: ການຄຸ້ມຄອງ ແລະ ບໍລິຫານ

ໃນມາດຕະຖານທີ 2 ປະກອບດ້ວຍ 6 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າກັບ 4.17 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີ ຄະແນນສູງກວ່າໝູ່ແມ່ນຕົວຊີ້ວັດທີ 9: ຖານະດ້ານການເງິນທີ່ຍືນຍົງ ແລະ ໝັ້ນຄົງມີຄະແນນເທົ່າ 5 ເຫັນວ່າຢູ່ໃນລະດັບດີຫຼາຍ ເນື່ອງຈາກວິທະຍາໄລຄູໄດ້ເອົາໃຈໃສ່ສະພາບດ້ານການເງິນຂອງສະຖາບັນໃຫ້ມີງົບປະມານປົກກະຕິໃນການສະໜັບສະໜູນການດຳເນີນງານໃນແຕ່ລະງວດ, ໃນແຕ່ລະສົກຮຽນໄດ້ທັນ 4 ງວດຢ່າງເປັນປົກກະຕິ. ສ່ວນຕົວຊີ້ວັດທີ 4, 5, 6, 7 ແລະ 8: ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງສະພາບໍລິຫານ, ໂຄງຮ່າງການຈັດຕັ້ງ, ແຜນຍຸດທະສາດພັດທະນາ, ນະໂຍບາຍ, ລະບຽບການ ແລະ ຂັ້ນຕອນການຄຸ້ມຄອງ-ບໍລິຫານພະນັກງານ ແລະ ການບໍລິຫານດ້ານການເງິນ ໄດ້ຄະແນນເທົ່າ 4 ເຫັນວ່າຢູ່ໃນລະດັບດີ ເນື່ອງຈາກວ່າວິທະຍາໄລຄູໄດ້ມີສະພາບໍລິຫານເຊິ່ງໄດ້ກຳນົດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບເປັນລາຍລັກອັກສອນ , ເປັນທີ່ຮັບຮູ້ຂອງທຸກພາກສ່ວນທີ່ກ່ຽວຂ້ອງ, ການປະຕິບັດໜ້າທີ່ສອດຄ່ອງກັບບັນດາດຳລັດ ແລະ ລະບຽບການທີ່ມີຢູ່, ມີໂຄງຮ່າງການຈັດຕັ້ງມີການກຳນົດໜ້າວຽກຕາມຕຳແໜ່ງງານຢ່າງຈະແຈ້ງ ພ້ອມທັງໄດ້ບັນຈຸພະນັກງານທີ່ມີຄຸນນະພາບເຂົ້າໃນບັນດາຕຳແໜ່ງ ບໍລິຫານຕ່າງໆຄວາມສາມາດຂອງແຕ່ລະບຸກຄົນຢ່າງເໝາະສົມ, ມີຂັ້ນຕອນການບໍລິຫານດ້ານການເງິນໂປ່ງໃສ ສາມາດກວດສອບໄດ້, ມີການເຜີຍແຜ່ໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຮູ້ແຕ່ຍັງບໍ່ເປັນປົກກະຕິ ແລະ ທົ່ວເຖິງ.

## ມາດຕະຖານທີ 3: ການພັດທະນາບຸກຄະລາກອນ

ໃນມາດຕະຖານທີ 3 ປະກອບດ້ວຍ 8 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າ 4.13 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີ. ຕົວຊີ້ວັດທີ່ມີຄະແນນສູງກວ່າໝູ່ແມ່ນຕົວຊີ້ວັດທີ 13, 15 ແລະ 17: ຈຳນວນອາຈານສອນຕ້ອງພຽງພໍໃນການຈັດຕັ້ງປະຕິບັດຫຼັກສູດ ແລະ ສອດຄ່ອງກັບຈຳນວນນັກສຶກສາ, ການກຳນົດໜ້າວຽກໃຫ້ພະນັກງານຕາມຕຳແໜ່ງຢ່າງຈະແຈ້ງ ແລະ ມີແຜນພັດທະນາບຸກຄະລາກອນທີ່ຈະແຈ້ງຕາມລຳດັບ ເຊິ່ງມີຄະແນນເທົ່າ 5 ເຫັນວ່າຢູ່ໃນລະດັບດີຫຼາຍ ເນື່ອງຈາກວິທະຍາໄລຄູ ໄດ້ມີແຜນການພັດທະນາຊັບພະຍາກອນມະນຸດໃຫ້ພຽງພໍ, ຢ່າງໜ້ອຍ 40% ຂອງຈຳນວນຄູສອນ ແລະ ພະນັກງານບໍລິຫານໄດ້ເຂົ້າຮ່ວມຍົກລະດັບ ແລະ ຝຶກອົບຮົມການສອນ ພ້ອມນັ້ນຍັງມີການກຳນົດໜ້າທີ່ວຽກງານ, ຄວາມຮັບຜິດຊອບໃນແຕ່ລະຕຳແໜ່ງງານຢ່າງຈະແຈ້ງ ແລະ ຄົບຖ້ວນ. ຄະແນນຖັດລົງມາແມ່ນຕົວຊີ້ວັດທີ 10 ມີກົນໄກການຄັດເລືອກ, ບັນຈຸ ແລະ ສັບຊ້ອນບຸກຄະລາກອນທີ່ຈະແຈ້ງ ແລະສອດຄ່ອງກັບຄວາມຕ້ອງການ ແລະ ແຜນພັດທະນາຂອງວິທະຍາໄລ, ຕົວຊີ້ວັດທີ 12 ອາຈານສອນມີຄວາມສາມາດໃນການຖ່າຍທອດຄວາມຮູ້ຄວາມສາມາດ ຕາມຫຼັກສູດຢ່າງເຂັ້ມງວດ ແລະ ຕົວຊີ້ວັດທີ 16 ມີລະບົບປະເມີນຜົນການສອນຂອງຄູອາຈານທີ່ເໝາະສົມ ມີຄະແນນເທົ່າກັບ 4 ເຫັນວ່າຢູ່ໃນລະດັບດີ ຍ້ອນວ່າສະຖາບັນຂອງພວກເຮົາມີຄູສອນພຽງພໍຕາມການກຳນົດ, ໄດ້ນຳໃຊ້ຄະແນນສະເລ່ຍຕາມຕົວຊີ້ບອກຂອງການປະເມີນຜົນງານຂອງລັດຖະກອນຄູ (ສະບັບເດືອນທັນວາ 2013) ຄະແນນສະເລ່ຍຂອງຂໍ້ III. (ດ້ານຈັນຍາບັນ), IV. (ດ້ານວິຊາຊີບ), VI. ດ້ານການພັດທະນາຕົນເອງ ແມ່ນ 3.50 ຫາ 3.99 ແລະ ມີລະບົບການປະເມີນຜົນການຮຽນ-ການສອນເປັນແຕ່ລະໄລຍະ ໂດຍຜູ້ບໍລິຫານ, ເພື່ອນຮ່ວມງານ ແລະ ນັກສຶກສາຢ່າງມີປະສິດທິພາບ, ນອກນັ້ນຍັງມີແຜນການພັດທະນາຊັບພະຍາກອນມະນຸດທີ່ຈະແຈ້ງ.

ສ່ວນຕົວຊີ້ວັດທີ່ມີຄະແນນໜ້ອຍກວ່າໝູ່ແມ່ນຕົວຊີ້ວັດທີ 11 ແລະ 14: ອາຈານສອນມີວຸດທິ ແລະ ຄວາມສາມາດທີ່ເໝາະສົມ ແລະ ອາຈານທີ່ປຶກສາການຂຽນບົດລາຍງານຕ້ອງເໝາະສົມທາງດ້ານຄຸນນະພາບ ແລະ ປະລິມານ ເຊິ່ງມີຄະແນນເທົ່າກັບ 3 ເຫັນວ່າຢູ່ໃນລະດັບປານກາງ ເນື່ອງຈາກວ່າຄູສອນທີ່ສອນໃນສະຖາບັນຂອງພວກເຮົາ ທີ່ສອນໃນແຕ່ລະຫຼັກສູດມີວຸດທິການສຶກສາສູງກວ່າລະດັບທີ່ເຂົາເຈົ້າສອນຍັງມີເປີເຊັນບໍ່ຫຼາຍ (ບໍ່ເຖິງ 90%) ແລະ ອາຈານເປັນຄູທີ່ປຶກສາການນຳພາຂຽນບົດລາຍງານຈົບຊັ້ນ ຍັງມີປະສົບການດ້ານດັ່ງກ່າວບໍ່ທັນສູງ ແລະ ອາຈານໜຶ່ງທ່ານຍັງເປັນທີ່ປຶກສາຫຼາຍຄົນ (ຫຼາຍກວ່າ 7 ຄົນຂຶ້ນໄປ).

## ມາດຕະຖານທີ 4: ຫຼັກສູດ

ໃນມາດຕະຖານທີ 4 ປະກອບດ້ວຍ 5 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າກັບ 4.20 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີ. ຕົວຊີ້ວັດທີ່ມີຄະແນນສູງກວ່າໝູ່ແມ່ນຕົວຊີ້ວັດທີ 21: ບັນດາຫຼັກສູດສົ່ງເສີມການຮຽນຮູ້ຕະຫຼອດຊີວິດໂດຍສົ່ງເສີມການຮຽນຮູ້ພາສາຕ່າງປະເທດ, ທັກສະໃນການຊອກຄົ້ນຂໍ້ມູນຂ່າວສານ, ການຄົ້ນຄິດດ້ວຍຕົນເອງ, ການສະແດງແນວຄິດ ແລະ ມີຄວາມມັກໃນການຮຽນຮູ້ ໄດ້ຄະແນນເທົ່າ 5 ເຫັນວ່າຢູ່ໃນລະດັບດີຫຼາຍ ເນື່ອງຈາກວ່າ ວິທະຍາໄລຄູໄດ້ສົ່ງເສີມໃຫ້ນັກຮຽນ-ນັກສຶກສາໄດ້ຮຽນຮູ້ພາສາຕ່າງປະເທດ, ມີທັກສະໃນການຊອກຮູ້ ແລະ ປະມວນຜົນຂໍ້ມູນຂ່າວສານ ເພື່ອພັດທະນາໃຫ້ເຂົາເຈົ້າມີການຄົ້ນຄິດຂັ້ນສູງ ກ້າສະແດງຄວາມຄິດຄວາມເຫັນ ແລະ ສະຫາວນມັກໃນການຮຽນຮູ້.

ຖັດລົງມາແມ່ນຄະແນນເທົ່າ 4 ເຫັນວ່າຢູ່ໃນລະດັບດີ ເຊິ່ງມີ 4 ຕົວຊີ້ວັດຄະແນນເທົ່າກັນໄດ້ແກ່ຕົວຊີ້ວັດທີ 18 ສະຖາບັນມີລະບົບພັດທະນາຫຼັກສູດທີ່ເໝາະສົມ, ຕົວຊີ້ວັດທີ 19 ບັນດາຫຼັກສູດທີ່ຖືກພັດທະນາຂຶ້ນມາໄດ້ກໍານົດຜົນການຮຽນຮູ້ຢ່າງຈະແຈ້ງ ແລະ ສອດຄ່ອງກັບຂອບຄຸນວຸດທິແຫ່ງຊາດ, ຕົວຊີ້ວັດທີ 20 ບັນດາຫຼັກສູດທີ່ຖືກພັດທະນາຂຶ້ນມາສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ, ຕະຫຼາດແຮງງານ ແລະ ການພັດທະນາຊັບພະຍາກອນມະນຸດຂອງປະເທດ ແລະ ຕົວຊີ້ວັດທີ 22 ສະຖາບັນມີຂະບວນການທົບທວນຫຼັກສູດໂດຍການມີສ່ວນຮ່ວມທັງພາຍໃນ ແລະພາຍນອກ ເນື່ອງຈາກວ່າ ສະຖາບັນໄດ້ເປີດສອນຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີ, ຫຼັກສູດສ້າງຄູອະນຸບານ/ປະຖົມຕາມແຜນການຂອງກົມສ້າງຄູ, ສົ່ງເສີມ ແລະ ຕິດຕາມກວດກາຄຸນນະພາບຂອງວຽກງານທາງວິຊາການ, ຫຼາຍກວ່າ 60%-79% ຂອງຈໍານວນຄູສອນໄດ້ປະຕິບັດສໍາເລັດຕາມຫຼັກສູດ, ແຜນການສອນ, ບົດສອນ ແລະ ຜະລິດອຸປະກອນການຮຽນ-ການສອນໄດ້. ຄູສອນສ່ວນຫຼາຍໄດ້ນໍາໃຊ້ອຸປະກອນການສອນທີ່ເໝາະສົມ ແລະ ຕົວຢ່າງທີ່ເປັນພາກປະຕິບັດຕົວຈິງເຂົ້າໃນການສິດສອນຂອງຕົນ ຊຶ່ງກວມເອົາຢ່າງໜ້ອຍ 20% ຂອງຫຼັກສູດ, ພ້ອມນັ້ນຍັງໄດ້ຈັດຕັ້ງ ການປະເມີນຜົນ ຮັບຟັງການປະກອບຄໍາຄິດຄໍາເຫັນສະທ້ອນຄືນກ່ຽວກັບການການສິດສອນ ຈາກນັກຮຽນ-ນັກສຶກສາ ແລະ ຄູສອນໃນທ້າຍພາກຮຽນ, ທ້າຍປີຮຽນ.

## ມາດຕະຖານທີ 5: ປະສິດທິຜົນຂອງການສອນ-ການຮຽນຮູ້

ໃນມາດຕະຖານທີ 5 ປະກອບດ້ວຍ 3 ຕົວຊີ້ວັດ ເຊິ່ງມີຄະແນນສະເລ່ຍສູງສຸດເທົ່າ 5.00 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີຫຼາຍ ໄດ້ແກ່ຕົວຊີ້ວັດທີ 23 ສະຖາບັນມີກົນໄກເພື່ອຕິດຕາມການຮຽນ-ການສອນ ແລະ ຮັບຟັງຄໍາຄິດຄໍາເຫັນຈາກພາກສ່ວນຕ່າງໆ ກ່ຽວກັບປະສິດທິຜົນຂອງການຮຽນ-ການສອນ, ຕົວຊີ້ວັດທີ 24 ການຮຽນ-ການສອນນໍາໃຊ້ເຕັກໂນໂລຊີ, ສື່ຕ່າງໆ ແລະ ຮູບແບບເອົານັກສຶກສາເປັນໃຈກາງ ແລະ ຕົວຊີ້ວັດທີ 25 ມີການຈັດສັນສະຖານທີ່ການລົງເຝິກງານຂອງນັກສຶກສາຢ່າງເໝາະສົມ ແລະ ພຽງພໍ ເນື່ອງຈາກວ່າສະຖາບັນໄດ້ມີການສົ່ງເສີມ ແລະ ຕິດຕາມກວດກາຄຸນນະພາບຂອງວຽກງານທາງວິຊາການ, 90%-100% ຂອງຈໍານວນຄູສອນໄດ້ປະຕິບັດສໍາເລັດແຜນການສອນ, ບົດສອນ, ຜະລິດອຸປະກອນການ-ການສອນໃຫ້ສອດຄ່ອງກັບບົດຮຽນ ແລະ ລາຍງານໃຫ້ຫ້ອງການພາກຮຽນລະຄັ້ງ, ຝຶກອົບຮົມ ແລະ ໃຫ້ຄູໄດ້ນໍາໃຊ້ສື່ເຕັກໂນໂລຊີຕ່າງໆ ເຊັ່ນ: ຄອມພິວເຕີ, ແອລຊີດີ, ສະມາດບອດ, ຮູບພາບ, ວີຊີດີ... ເຂົ້າໃນການຮຽນ-ການສອນ; ຄູສອນສ່ວນຫຼວງຫຼາຍໄດ້ໃຫ້ນັກຮຽນຄົ້ນຄິດຊອກຫາບັນຫາ - ແກ້ໄຂບັນຫາເປັນລາຍບຸກຄົນ ແລະ ເປັນກຸ່ມ; ມີການປະສານສົມທົບກັບບ່ອນທີ່ລົງເຝິກຫັດ ແລະ ຝຶກປະສົບການ ຢ່າງເໝາະສົມໂດຍສະເພາະທາງດ້ານອາຄານສະຖານທີ່, ໄລຍະທາງ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ເປັນຕົ້ນແມ່ນຫ້ອງຮຽນ, ນັກຮຽນ ແລະ ຄູສອນໃຫ້ເໝາະສົມ ແລະ ພຽງພໍກັບຈໍານວນນັກຝຶກຫັດ, ພ້ອມທັງມີການປະຖົມນິເທດໃຫ້ນັກສຶກສາທີ່ຈະລົງເຝິກຫັດ ແລະ ຄູ-ອາຈານບ່ອນທີ່ຈະລົງຝຶກຫັດຄົບທຸກສູນໃນແຕ່ລະປີ.

## ມາດຕະຖານທີ 6: ການສົ່ງເສີມນັກຮຽນ-ນັກສຶກສາ

ໃນມາດຕະຖານທີ 6 ປະກອບດ້ວຍ 7 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າກັບ 4.43 ຄະແນນ, ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີ. ເຊິ່ງມີຕົວຊີ້ວັດທີ່ມີຄະແນນສູງກວ່າໝູ່ມີເຖິງ 4 ຕົວຊີ້ວັດຄື: ຕົວຊີ້ວັດທີ 26 ມີລະບຽບຫຼັກການ, ມາດຕະຖານຈະແຈ້ງໃນການຮັບນັກສຶກສາເຂົ້າຮຽນຢູ່ສະຖາບັນ, ຕົວຊີ້ວັດທີ 27 ສະຖາບັນເຫັນຄວາມສຳຄັນ ແລະ ມີກົນໄກໃນການໃຫ້ຄຳປຶກສາທັງທາງດ້ານວິຊາການ ແລະ ບັນຫາອື່ນໆ, ຕົວຊີ້ວັດທີ 28 ມີແຜນການເຄື່ອນໄຫວນອກຫຼັກສູດ, ໄດ້ຜັນຂະຫຍາຍອອກເປັນແຜນກິດຈະກຳ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ, ຕົວຊີ້ວັດທີ 29 ມີການຈັດຕັ້ງນັກຮຽນນັກສຶກສາແລະ ໄດ້ເຄື່ອນໄຫວຢ່າງເຕັມສ່ວນຕໍ່ບັນດາກິດຈະກຳຕ່າງໆ ຂອງສະຖາບັນ  ແລະ ຕົວຊີ້ວັດທີ 30 ອົງການຈັດຕັ້ງມະຫາຊົນ ແລະ ມີການເຄື່ອນໄຫວຢ່າງເຕັມສ່ວນເຂົ້າໃນກິດຈະກຳຕ່າງໆ ເນື່ອງຈາກວ່າສະຖາບັນໄດ້ປະຕິບັດຕາມມະຕິຂອງຂັ້ນເທິງ ໂດຍສະເພາະມະຕິຂອງກົມສ້າງຄູຢ່າງເຂັ້ມງວດກ່ຽວກັບການຮັບເອົານັກຮຽນເຂົ້າຮຽນຄູ ເຊັ່ນ: ຄວາມສະເໝີພາບໃນການເຂົ້າເຖິງການສຶກສາສ້າງຄູໂດຍບໍ່ຈຳ ແນກເພດ  ແລະ ຊົນເຜົ່າ, ມີການຝຶກອົບຮົມໃຫ້ແກ່ຜູ້ໃຫ້ຄຳປຶກສາທາງດ້ານວິຊາການເຊັ່ນ: ການຮຽນ, ຄູທີ່ປຶກສາຂຽນບົດລາຍງານ ແລະ ທາງດ້ານຈິດຕະວິທະຍາ ແລະ ມີການບໍລິການນັກສຶກສາເຊັ່ນ: ແນະແນວ, ໃຫ້ຄຳປຶກສາ ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ນັກສຶກສາ ພ້ອມນັ້ນຍັງມີແຜນກິດຈະກຳອັນລະອຽດ (ແຜນສົກຮຽນ, ແຜນພາກຮຽນ ແລະ ແຜນປະຈຳເດືອນ) ພ້ອມທັງສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດຢ່າງທົ່ວເຖິງ ແລະ ເປັນປົກກະຕິ, ສະໜັບສະໜູນການຈັດຕັ້ງນັກຮຽນ-ນັກສຶກສາ ກ່ຽວກັບກິດຈະກຳເຄື່ອນໄຫວໃນ-ນອກຫຼັກສູດ ແລະ ໃນ-ນອກໂຮງຮຽນເຊັ່ນ: ການຖາມຕອບວິທະຍາສາດ, ການວາງສະແດງຜົນງານທາງວິຊາການ, ກິລາກາຍະກຳ, ສິລະປະວັນນະຄະດີ ແລະ ຊ່ວຍເຫຼືອສັງຄົມ; ກວ່າ 80% ຂອງນັກຮຽນ-ນັກສຶກສາແມ່ນເປັນສະມາຊິກໃດໜຶ່ງຂອງສາມອົງການຈັດຕັ້ງມະຫາຊົນ ແລະ ໄດ້ມີການເຄື່ອນໄຫວກິດຈະກຳຕ່າງໆຢ່າງເຕັມສ່ວນ.

ຕົວຊີ້ວັດທີ່ມີຄະແນນໜ້ອຍມີ 2 ຕົວຊີ້ວັດຄື: ຕົວຊີ້ວັດທີ 31 ມີການຮ່ວມມືກັບອະດີດນັກສຶກສາທີ່ຈົບຈາກສະຖາບັນໃນຮູບແບບຕ່າງໆ ແລະ ໄດ້ຈັດຕັ້ງປະຕິບັດປົກກະຕິ ແລະ ຕົວຊີ້ວັດທີ 32 ເຄືອຄ່າຍກັບຜູ້ປະກອບການ (ຫົວໜ່ວຍທຸລະກິດອື່ນໆ) ແລະ ມີການເຄື່ອນໄຫວເປັນປົກກະຕິເພື່ອຊ່ວຍນັກສຶກສາທີ່ຮຽນຈົບໃໝ່ໃນການຊອກວຽກເຮັດງານທຳ ຫຼື ເຄືອຄ່າຍການປະສານງານ, ຕິດຕາມ ແລະ ເກັບກຳຂໍ້ມູນຜູ້ສຳເລັດການສຶກສາ ການຮ່ວມມືກັບອະດີດນັກສຶກສາທີ່ຈົບຈາກສະຖາບັນໃນຮູບແບບຕ່າງໆ ແລະ ເຄືອຄ່າຍກັບຜູ້ປະກອບການ (ຫົວໜ່ວຍທຸລະກິດອື່ນໆ) ມີຄະແນນເທົ່າ 3 ເຫັນວ່າຢູ່ໃນລະດັບປານກາງ ເນື່ອງຈາກວ່າໃນການຈັດການພົບປະອະດີດນັກສຶກສາ ແລະ ມີກິດຈະກຳຕ່າງໆຮ່ວມກັນ ເຊັ່ນ: ສຳມະນາ, ປາຖະກະຖາແລກປ່ຽນບົດຮຽນ, ລະດົມທຶນຫາລາຍໄດ້, ກິລາກາຍະກຳ ແລະ ສິລະປະວັນນະຄະດີ ສະຖາບັນເຮັດໄດ້ໃນບາງໂອກາດເທົ່ານັ້ນ ບໍ່ທັນເປັນປົກກະຕິຕໍ່ເນື່ອງ ແລະ ການປະສານງານ, ການຕິດຕາມ ແລະ ເກັບກຳຂໍ້ມູນນັກຮຽນ-ນັກສຶກສາ ທີ່ສຳເລັດການສຶກສາໄລຍະ 3 ປີຜ່ານມາຍັງເຮັດໄດ້ບໍ່ທັນປົກກະຕິ.

## ມາດຕະຖານທີ 7: ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້

ມາດຕະຖານທີ 7 ປະກອບດ້ວຍ 8 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າ 4.50 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີ ຫາ ດີຫຼາຍ, ໃນມາດຕະຖານນີ້ກໍມີຕົວຊີ້ວັດທີ່ມີຄະແນນສູງກວ່າໝູ່ຄື ໄດ້ຄະແນນ 5 ເຖິງ 4 ຕົວຊີ້ວັດໄດ້ແກ່ຕົວຊີ້ວັດທີ 33 ສະຖາບັນຕັ້ງຢູ່ໃນສະພາບແວດລ້ອມທີ່ເອື້ອອຳນວຍສຳລັບການຮຽນ-ການສອນ ພ້ອມມີສະຖານທີ່ກວ້າງຂວາງເພື່ອຕອບສະໜອງ 5 ຫຼັກມູນການສຶກສາ; ຕົວຊີ້ວັດທີ 36 ສະຖາບັນມີລະບົບປ້ອງກັນຄວາມສະຫງົບພາຍໃນສະຖາບັນຂອງຕົນ; ຕົວຊີ້ວັດທີ 38 ສະຖາບັນມີແຫຼ່ງຮຽນຮູ້ທີ່ພຽງພໍຢູ່ໃນສະຖາບັນຕົນເອງ ເຊັ່ນ: ຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງຄອມພິວເຕີ, ສື່ທາງເອເລັກໂຕຼນິກ ແລະ ອື່ນໆ ເພື່ອຮັບໃຊ້ການຮຽນ-ການສອນ, ການຄົ້ນຄ້ວາວິທະຍາສາດ ແລະ ກິດຈະກຳຂອງສະຖາບັນ ແລະ ຕົວຊີ້ວັດທີ 39 ບັນດາແຫຼ່ງຮຽນຮູ້ທີ່ມີ

ພຽງພໍແລ້ວຍັງຕ້ອງມີການປັບປຸງຕະຫຼອດເວລາໃນຮູບແບບຕ່າງໆ ເພື່ອໃຫ້ບໍລິການນັກສຶກສາ, ຄູອາຈານ ແລະ ພະນັກງານອື່ນໆໄດ້ນຳໃຊ້ ແນໃສ່ສະໜັບສະໜູນການຮຽນ-ການສອນ ຍ້ອນວ່າວິທະຍາໄລຄູພວກຂ້າພະເຈົ້າ ມີສະຖານທີ່ກວ້າງຂວາງ, ມີສະພາບແວດລ້ອມທີ່ເອື້ອອຳນວຍສຳລັບການຮຽນ-ການສອນ ທີ່ສາມາດຕອບສະໜອງໄດ້ 5 ຫຼັກມູນການສຶກສາ, ມີລະບົບປ້ອງກັນຄວາມສະຫງົບພາຍໃນຄົບຊຸດ ເຊັ່ນ: ມີການແຕ່ງຕັ້ງຄະນະຮັບຜິດຊອບປ້ອງກັນຄວາມສະຫງົບຂອງສະຖາບັນ, ພະນັກງານຄູ-ອາຈານ ຕະຫຼອດຮອດນັກສຶກສາລ້ວນແຕ່ມີສ່ວນຮ່ວມໃນການເວນຍາມເປັນປົກກະຕິ, ນອກນັ້ນຍັງມີແຫຼ່ງການຮຽນຮູ້ທີ່ພຽງພໍ ເຊັ່ນ: ມີຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງຟັງສຽງ, ຫ້ອງຄອມພິວເຕີ ແລະ ອື່ນໆ ເພື່ອຮັບໃຊ້ການຮຽນ-ການສອນ, ການຄົ້ນຄ້ວາວິທະຍາສາດ ແລະ ກິດຈະກຳຂອງສະຖາບັນ.

ຕົວຊີ້ວັດທີ່ມີຄະແນນຖັດລົງມາ ແລະ ໄດ້ຄະແນນ 4 ກໍມີ 4 ຕົວຊີ້ວັດເຊັ່ນດຽວກັນຄື: ຕົວຊີ້ວັດທີ 34 ສະຖາບັນມີສິ່ງອຳນວຍຄວາມສະດວກທີ່ພຽງພໍເຊັ່ນ: ອາຄານ, ຫ້ອງຮຽນ, ຫ້ອງການ, ຫ້ອງປະຊຸມ, ສະໂມສອນ, ຫ້ອງປະຖົມພະຍາບານຂັ້ນພື້ນຖານ, ຫ້ອງນ້ຳ, ລະບົບໄຟຟ້າ, ນ້ຳປະປາ ຫຼື ລະບົບນ້ຳສະອາດ ແລະ ເຄື່ອງມືຮັບໃຊ້ທີ່ຈຳເປັນ ອື່ນໆ; ຕົວຊີ້ວັດທີ 35 ສະຖາບັນມີລະບົບສຸຂະອານາໄມ ແລະ ຄວາມປອດໄພສຳລັບພະນັກງານ, ຄູອາຈານ ແລະ ນັກສຶກສາທີ່ນຳໃຊ້ສິ່ງອຳນວຍຄວາມສະດວກພາຍໃນສະຖາບັນ; ຕົວຊີ້ວັດທີ 37 ສະຖາບັນມີການບຳລຸງຮັກສາ, ສ້ອມແປງ, ຂະຫຍາຍ/ພັດທະນາ ແລະ ປັບປຸງສິ່ງອຳນວຍຄວາມສະດວກຄົບວົງຈອນຂອງຕົນເປັນແຕ່ລະໄລຍະ ໂດຍອີງຕາມຄວາມຕ້ອງການໃນປະຈຸບັນ ແລະ ອະນາຄົດ ແລະ ຕົວຊີ້ວັດທີ 40 ມີແຜນປັບປຸງ ແລະ ພັດທະນາແຫຼ່ງຮຽນຮູ້ທີ່ຈະແຈ້ງ ພ້ອມທັງພະນັກງານເໝາະສົມ ແລະ ມີປະສົບການເພື່ອຄຸ້ມຄອງຕິດຕາມການນຳໃຊ້ບັນດາແຫຼ່ງຮຽນຮູ້ຕ່າງໆ ເນື່ອງຈາກສະຖາບັນຍັງຂາດສິ່ງອຳນວຍຄວາມສະດວກບາງຢ່າງ (ຂາດຫ້ອງປະຖົມພະຍາບານ ແລະ ຂາດແພດ), ລະບົບສຸຂະອະນາໄມຂອງສະຖາບັນຍັງບໍ່ດີເທົ່າທີ່ຄວນ, ການບຳລຸງຮັກສາ, ສ້ອມແປງ, ຂະຫຍາຍ/ພັດທະນາ ແລະ ປັບປຸງສິ່ງອຳນວຍຄວາມສະດວກ, ແຫຼ່ງການຮຽນຮູ້ ກໍເຮັດເປັນບາງຄັ້ງໂດຍອີງຕາມຄວາມຕ້ອງການຕົວຈິງຂອງວຽກງານເປັນສ່ວນຫຼາຍ ເຊິ່ງບັນຫາດັ່ງກ່າວສະຖາບັນຕ້ອງໄດ້ມີແຜນການປັບປຸງ/ພັດທະນາໃຫ້ດີຂຶ້ນໃຫ້ໄດ້ໃນສົກຮຽນຕໍ່ໄປ.

## ມາດຕະຖານທີ 8: ລະບົບຂໍ້ມູນຂ່າວສານ

ໃນມາດຕະຖານທີ 8 ປະກອບດ້ວຍ 3 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າ 4.67 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນ ລະດັບດີ ຫາ ດີຫຼາຍ. ໃນນັ້ນຄະແນນສູງກວ່າໝູ່ມີ 2 ຕົວຊີ້ວັດຄື: ຕົວຊີ້ວັດທີ 41 ມີລະບົບຂໍ້ມູນເພື່ອບໍລິຫານ ແລະ ຄຸ້ມຄອງໃນສະຖາບັນທີ່ມີປະສິດທິພາບ, ທັນກັບສະພາບການ ແລະ ຮັບປະກັນຄວາມປອດໄພ ແລະ ຕົວຊີ້ວັດທີ 42 ສະຖາບັນມີຂໍ້ມູນປະຫວັດນັກສຶກສາ (ເຊັ່ນ: ຈຳນວນນັກສຶກສາເຂົ້າຮຽນ, ອັດຕາການປະລະການສຶກສາ, ຈຳນວນຜູ້ສຳເລັດການສຶກສາ, ອັດຕາຜູ້ສຶກສາຕໍ່ ແລະ ການກ້າວໄປສູ່ການຊອກວຽກເຮັດງານທຳ) ແລະ ຖານຂໍ້ມູນຂອງຄູອາຈານ, ພະນັກງານບໍລິຫານ ມີຄະແນນເທົ່າ 5 ເຫັນວ່າຢູ່ໃນລະດັບດີຫຼາຍ ເນື່ອງຈາກວ່າວິທະຍາໄລຄູຂອງພວກເຮົາໄດ້ຖືເອົາວຽກລະບົບຖານຂໍ້ມູນເປັນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນ ຕົວຢ່າງ: ມີຖານຂໍ້ມູນນັກຮຽນ-ນັກສຶກສາທີ່ໄດ້ລົງທະບຽນ, ອັດຕາສ່ວນຜູ້ປະລະ ແລະ ຜູ້ຮຽນຈົບ/ສຳເລັດຫຼັກສູດ ແລະ ອື່ນໆຕາມຕົວຊີ້ບອກທີ່ໄດ້ກຳນົດໄວ້ໃນຄູ່ມືລະບົບຄຸ້ມຄອງຂໍ້ມູນຂ່າວສານການສ້າງຄູ (TEMIS) ແລະ ມີຖານຂໍ້ມູນກ່ຽວກັບຄູສອນ ແລະ ຜູ້ທີ່ບໍ່ໄດ້ສອນທີ່ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້. ຄະແນນຖັດລົງມາ ແມ່ນຕົວຊີ້ວັດທີ 43 ມີລະບົບຂໍ້ມູນ ແລະ ຖານຂໍ້ມູນລາຍການຊັບສິນ ແລະ ເຄື່ອງໃນສາງທີ່ເປັນຂອງສະຖາບັນຖືກເກັບຮັກສາໄວ້ດີ ໄດ້ຄະແນນເທົ່າ 4 ເຫັນວ່າຢູ່ໃນລະດັບດີ ເນື່ອງຈາກສະຖາບັນມີລະບົບຂໍ້ມູນ ແລະ ຖານຂໍ້ມູນລາຍການຊັບສິນຢູ່ ແຕ່ພວກເຮົາຍັງຂາດພະນັກງານຮັບຜິດຊອບສາງໂດຍສະເພາະ ເຊິ່ງບັນຫານີ້ທາງສະຖາບັນມີແຜນຈະແກ້ໄຂໃຫ້ໄດ້ໃນສົກຮຽນຕໍ່ໄປ.

## ມາດຕະຖານທີ 9: ການປະກັນຄຸນນະພາບພາຍໃນ

ໃນມາດຕະຖານ ທີ 9 ປະກອບດ້ວຍ 4 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າ 4.25 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີ. ໃນນັ້ນຕົວຊີ້ວັດທີ່ຄະແນນສູງ ໄດ້ຄະແນນເທົ່າ 5 ເຫັນວ່າຢູ່ໃນລະດັບດີຫຼາຍ ແມ່ນຕົວຊີ້ວັດທີ 47 ສະຖາບັນມີການການທົບທວນ, ຕິດຕາມ ແລະ ປັບປຸງວຽກງານປະກັນຄຸນນະພາບຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເນື່ອງຈາກທາງວິທະຍາໄລຄູໄດ້ປະຕິບັດວຽກງານດັ່ງກ່າວຢ່າງເປັນປົກກະຕິໃນແຕ່ລະປີ. ຄະແນນຖັດລົງມາ ທີ່ໄດ້ຄະແນນເທົ່າ 4 ເຫັນວ່າຢູ່ໃນລະດັບດີມີ 3 ຕົວຊີ້ວັດຄື: ຕົວຊີ້ວັດທີ 44 ສະຖາບັນມີນະໂຍບາຍ, ຍຸດທະສາດ, ແຜນການ-ແຜນງານ ແລະ ຂັ້ນຕອນການປະກັນຄຸນນະພາບທີ່ຈະແຈ້ງ; ຕົວຊີ້ວັດທີ 45 ສະຖາບັນຈັດການເຜີຍແຜ່ ແລະ ເຝິກອົບຮົມກ່ຽວກັບວຽກງານປະກັນຄຸນນະພາບໃຫ້ພະນັກງານ ແລະ ນັກສຶກສາໃຫ້ມີຄວາມຮູ້ ແລະ ຄວາມເຂົ້າໃຈຢ່າງເປັນປົກກະຕິ ແລະ ຕົວຊີ້ວັດທີ 46 ຜົນຂອງການປະເມີນຕົນເອງໄດ້ຖືກນຳໃຊ້ ແລະ ຜັນຂະຫຍາຍເຂົ້າໃນແຜນການພັດທະນາ ເນື່ອງຈາກວິທະຍາໄລຄູຂອງພວກເຮົາເຖິງວ່າໄດ້ມີການເຜີຍແຜ່ວຽກງານປະກັນຄຸນນະພາບໃຫ້ຄູອາຈານ ແລະ ພະນັກງານໄດ້ຮັບຮູ້ກໍຈິງແຕ່ຍັງບໍ່ທັນຕໍ່ເນື່ອງ ແລະ ເປັນປົກກະຕິເທື່ອ ແລະ ຍັງບໍ່ທັນໄດ້ເຜີຍແຜ່ໃຫ້ນັກສຶກສາໄດ້ຮັບຮູ້ຢ່າງທົ່ວເຖິງ ບັນຫານີ້ໄດ້ເອກະພາບກັນວ່າຈະຕ້ອງເພີ່ມທະວີການເຜີຍແຜ່ໃຫ້ຄູອາຈານ-ພະນັກງານ ແລະ ນັກສຶກສາໃນທົ່ວສະຖາບັນໄດ້ຮັບຮູ້ໃຫ້ຫຼາຍຂຶ້ນກວ່າເກົ່າດ້ວຍຮູບການເພີ່ມຊ່ອງທາງການເຜີຍແຜ່ໃຫ້ຫຼາຍຂຶ້ນ ເພື່ອຄວາມສະດວກໃນການຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ.

## ມາດຕະຖານທີ 10: ການຄົ້ນຄວ້າວິທະຍາສາດ ແລະ ສິ່ງພິມ

ໃນມາດຕະຖານທີ 10 ປະກອບດ້ວຍ 3 ຕົວຊີ້ວັດ ມີຄະແນນສະເລ່ຍເທົ່າ 4.67 ຖ້າທຽບໃສ່ລະດັບຄະແນນເຫັນວ່າຢູ່ໃນລະດັບດີ ຫາ ດີຫຼາຍ. ຕົວຊີ້ວັດທີ່ມີຄະແນນສູງກວ່າໝູ່ມີ 2 ຕົວຊີ້ວັດຄື ຕົວຊີ້ວັດທີ 49 ມີການຄົ້ນຄວ້າວິທະຍາສາດເປັນປົກກະຕິ ແລະ ໄດ້ເຜີຍແຜ່ຜົນງານການຄົ້ນຄ້ວາໃຫ້ສັງຄົມໄດ້ຮັບຮູ້ ແລະ ຕົວຊີ້ວັດທີ 50 ມີການບໍລິການທາງດ້ານວິຊາການໃຫ້ແກ່ສັງຄົມເປັນປົກກະຕິ ເຊິ່ງໄດ້ຄະແນນເທົ່າ 5 ຢູ່ໃນລະດັບດີຫຼາຍ ເນື່ອງຈາກວ່າ ສະຖາບັນໄດ້ມີການຄົ້ນຄວ້າວິໄຈ ແລະ ໄດ້ເຜີຍແຜ່ຜົນງານການຄົ້ນຄ້ວາດັ່ງກ່າວໃຫ້ສັງຄົມໄດ້ຮັບຮູ້ ນອກນັ້ນຍັງມີການບໍລິການທາງດ້ານວິຊາການໃຫ້ແກ່ສັງຄົມອີກ ເຊັ່ນວ່າ ໄດ້ລົງໄປໃຫ້ຂໍ້ມູນກ່ຽວກັບສຸຂະພາບຈະເລີນພັນ ແລະ ເຝິກອົບຮົມການສອນພາສາອັງກິດໃຫ້ຄູສອນຊັ້ນປະຖົມໃນເມືອງຕ່າງໆຂອງແຂວງ. ຄະແນນຖັດລົງມາແມ່ນຕົວຊີ້ວັດທີ 48 ສະຖາບັນມີນະໂຍບາຍ, ຍຸດທະສາດ ແລະ ລະບຽບການທີ່ສົ່ງເສີມຄູອາຈານ ແລະ ນັກສຶກສາດຳເນີນການຄົ້ນຄວ້າວິໄຈ ແລະ ການໃຫ້ບໍລິການແກ່ສັງຄົມພາຍໃນ ແລະ ສະຖາບັນຕ່າງໆ ໄດ້ຄະແນນເທົ່າ 4 ເຫັນວ່າຢູ່ໃນລະດັບດີ ເນື່ອງຈາກວ່າວິທະຍາໄລຄູເຮົາເຮັດໄດ້ດີສົມຄວນ ແຕ່ບໍ່ທັນປົກກະຕິ ແລະ ຫຼວງຫຼາຍເທົ່າທີ່ຄວນ ເຊິ່ງປັດຈຸບັນສະຖາບັນໄດ້ມີນະໂຍບາຍເປີດກວ້າງ ໃຫ້ຄູອາຈານພາຍໃນສະຖາບັນໄດ້ເຮັດວຽກງານດ້ານນີ້ຢ່າງເຕັມສ່ວນ ແລະ ໃຫ້ຫຼາຍທີ່ສຸດ.

## II. ຈຸດອ່ອນ-ຂໍ້ຄົງຄ້າງ, ສາເຫດທີ່ພາໃຫ້ມີຈຸດອ່ອນ-ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ

- **ຈຸດອ່ອນ-ຂໍ້ຄົງຄ້າງ:**

- ການດຳເນີນການກວດກາລະບົບຮັບປະກັນຄຸນະພາບພາຍໃນຍັງບໍ່ຖືກຕ້ອງຕາມໄລຍະ ແລະ ບໍ່ຄົບ 2 ຄັ້ງຕໍ່ປີ
- ງົບປະມານທີ່ໃຊ້ໃນວຽກງານດັ່ງກ່າວຍັງມີຈຳກັດ

- **ສາເຫດທີ່ພາໃຫ້ມີຈຸດອ່ອນ-ຂໍ້ຄົງຄ້າງ:**

- ຄວາມຮັບຮູ້, ເຂົ້າໃຈຂອງບຸກຄະລາກອນຈຳນວນໜຶ່ງບໍ່ທັນຫຼາຍກ່ຽວກັບວຽກງານນີ້.
- ເວລາໃນການປະຕິບັດມີໜ້ອຍ, ບຸກຄະລາກອນທີ່ຮັບຜິດຊອບມີວຽກສິດສອນ ແລະ ຮັບຜິດຊອບວຽກງານອື່ນໆຕື່ມອີກ.

- **ສິ່ງທ້າທາຍ:**

- ຄວາມເຂົ້າໃຈ ແລະ ປະສົບການ ກ່ຽວກັບວຽກງານນີ້ຍັງບໍ່ຫຼາຍ.
- ມີບາງຂໍ້ມູນ ຕົວຊີ້ວັດຂອງຮ່າງປະເມີນຍັງບໍ່ທັນຈະແຈ້ງເຮັດໃຫ້ເຂົ້າໃຈບໍ່ກົງກັນ.

## III. ຕີລາຄາລວມ

- **ຈຸດດີ:**

- ຜູ້ບໍລິຫານທຸກຂັ້ນ ໂດຍສະເພາະຄະນະອຳນວຍການໄດ້ເອົາໃຈໃສ່ຊຸກຍູ້ ແລະ ໃຫ້ທິດຊີ້ນໍາເປັນປົກກະຕິ.
- ພາກສ່ວນກ່ຽວຂ້ອງທຸກທ່ານໄດ້ຮັບຮູ້, ເຂົ້າໃຈ ແລະ ເຫັນຄວາມສຳຄັນຂອງວຽກງານນີ້ຢ່າງເລິກເຊິ່ງເຖິງຖອງ ດັ່ງນັ້ນຈຶ່ງໄດ້ຮັບຄວາມຮ່ວມມືເປັນຢ່າງດີ.
- ທຸກໆໜ້າວຽກຍ່ອຍໄດ້ຮັບການປະເມີນຜົນ.
- ແຕ່ລະຫ້ອງການມີລະບົບຂໍ້ມູນຄົບຖ້ວນສົມຄວນ.

- **ຈຸດອ່ອນ:**

- ຄູອາຈານທີ່ຮັບຜິດຊອບວຽກງານດັ່ງກ່າວມີຊົ່ວໂມງສອນຫຼາຍ, ຮັບຜິດຊອບວຽກງານການຈັດຕັ້ງມະຫາຊົນ ແລະ ອື່ນໆ.
- ຄວາມເຂົ້າໃຈຂອງຄູອາຈານຈຳນວນໜຶ່ງຕໍ່ລະບົບຮັບປະກັນຄຸນະພາບ ຍັງບໍ່ທັນເລິກເຊິ່ງເທົ່າທີ່ຄວນ.

## IV. ຖອດຖອນບົດຮຽນ

- ຫ້ອງການວັດປະເມີນຜົນຄວນມີການປະສານສົມທົບກັບກັບພາກສ່ວນກ່ຽວຂ້ອງຢ່າງເປັນລະບົບ ແລະ ຕໍ່ເນື່ອງ.
- ວາງແຜນການປະເມີນຜົນເພື່ອປະຕິບັດໃຫ້ຖືກຕາມໄລຍະ ແລະ ທັນຕາມກຳນົດເວລາ.
- ຈັດຝຶກອົບຮົມໃຫ້ຄະນະຫ້ອງການ, ພາກສ່ວນທີ່ກ່ຽວຂ້ອງ ຕະຫຼອດຮອດຄູອາຈານທຸກຄົນພາຍໃນສະຖາບັນ ເພື່ອຮັບປະກັນການຕີລາຄາ/ກວດກາໄດ້ຢ່າງຖືກຕ້ອງ.

## V. ຂໍ້ສະເໜີຕ່າງໆ

- ຈັດກອງປະຊຸມລາຍງານ ແລະ ຖອດຖອນບົດຮຽນກັບສະຖາບັນສ້າງຄູແຫ່ງຕ່າງໆ ເພື່ອໃຫ້ເປັນເອກະພາບໃນດ້ານການປະຕິບັດ ແລະ ໃຫ້ມີຄວາມຊັດເຈນກວ່າເກົ່າ.
- ຄວນຈັດຝຶກອົບຮົມໃຫ້ຄະນະຮັບຜິດຊອບວຽກງານດັ່ງກ່າວຂອງແຕ່ລະສະຖາບັນເປັນປະຈຳ ແລະ ຕໍ່ເນື່ອງ

## ການລົງຄວາມເຫັນກ່ຽວກັບການກວດກາຄຸນນະພາບພາຍໃນ

| ລຳດັບ | ມາດຕະຖານ | ຈຳນວນຕົວຊີ້ວັດ | ຄະແນນສະເລ່ຍ | ຈັດປະເພດ |
|---|---|---|---|---|
| 1. | ວິໄສທັດ, ພາລະກິດ ແລະ ເປົ້າໝາຍ | 3 | 3.67 | ປານກາງ ຫາ ດີ |
| 2. | ການຄຸ້ມຄອງ ແລະ ບໍລິຫານ | 6 | 4.17 | ດີ |
| 3. | ການພັດທະນາບຸກລະລາກອນ | 8 | 4.13 | ດີ |
| 4. | ຫຼັກສູດ | 5 | 4.20 | ດີ |
| 5. | ປະສິດທິຜົນຂອງການຮຽນ-ການສອນ | 3 | 5.00 | ດີຫຼາຍ |
| 6. | ການສົ່ງເສີມນັກຮຽນ/ນັກສຶກສາ | 7 | 4.43 | ດີ |
| 7. | ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້ | 8 | 4.50 | ດີ ຫາ ດີຫຼາຍ |
| 8. | ລະບົບຂໍ້ມູນຂ່າວສານ | 3 | 4.67 | ດີ ຫາ ດີຫຼາຍ |
| 9. | ລະບົບການປະກັນຄຸນນະພາບພາຍໃນ | 4 | 4.25 | ດີ |
| 10. | ການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ | 3 | 4.67 | ດີ ຫາ ດີຫຼາຍ |
| | **ຈຳນວນຕົວຊີ້ວັດ ແລະ ຄະແນນສະເລ່ຍ** | 50 | 4.37 | ດີ |
| | ຄິດເປັນເປີເຊັນ | | 87.38% | |

ວິທະຍາໄລຄູສະຫວັນນະເຂດ

ຜູ້ອຳນວຍການ

ລັດສະໝີ ພະໄຊສີ

# ເອກະສານຄັດຕິດ

**ມາດຕະຖານທີ 1: ວິໄສທັດ, ພາລະກິດ, ເປົ້າໝາຍ**

ວິໄສທັດ, ເປົ້າໝາຍ, ພາລະກິດ ແລະ ຂອງສະຖາບັນ ໄດ້ກຳນົດຢ່າງຈະແຈ້ງກ່ຽວກັບສະຖາບັນ ກິດຈະກຳດ້ານການສຶກສາ ແລະ ບົດບາດ/ພາລະກິດ ຢູ່ຄະນະສຶກສາສາດ, ສະຖາບັນສ້າງຄູ, ວິທະຍາໄລຄູ. ການກຳນົດວິໄສທັດ, ເປົ້າໝາຍ, ພາລະກິດ ແລະ ຂອງສະຖາບັນ ຈະຕ້ອງຕອບສະໜອງຄວາມຕ້ອງການຕົວຈິງຂອງປະເທດ ແລະ ຈະຕ້ອງສອດຄ່ອງກັບການເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ສິ່ງເຫຼົ່ານີ້ຕ້ອງໄດ້ຮັບການເຜີຍແຜ່ ປະຊາສຳພັນ ໂຄສະນາ ໃນຮູບແບບຕ່າງໆ ເຊັ່ນ: ປຶ້ມ, ເວັບໄຊ ແລະ ອື່ນໆ ແລະ ມີຄວາມພ້ອມ ສອດຄ່ອງກັບຄວາມມຸ່ງຫວັງຂອງນັກສຶກສາ ຫຼື ບຸກຄົນທີ່ກ່ຽວຂ້ອງອື່ນໆ. ມີການສະແດງໃຫ້ເຫັນຫຼັກຖານວ່າ ພາກສ່ວນກ່ຽວຂ້ອງຕ່າງໆໄດ້ຕອບຮັບວິໄສທັດ, ເປົ້າໝາຍ, ພາລະກິດ ຂອງສະຖາບັນ ແລະ ພາກສ່ວນວິຊາການທີ່ຕັ້ງຂຶ້ນໃໝ່ ກໍ່ໄດ້ມີທ່າອ່ຽງໄປຕາມທິດທາງນີ້ເຊັ່ນກັນ. ນອກຈາກນີ້, ການທົບທວນຄືນ ແລະ ການແກ້ໄຂປັບປຸງກ່ຽວກັບວິໄສທັດ, ເປົ້າໝາຍ, ພາລະກິດ ແລະ ຍັງໄດ້ປະຕິບັດຢູ່ຕາມຄວາມຈຳເປັນ.

| *ຕົວຊີ້ວັດ* | *ເກນໃຫ້ຄະແນນ* | *ຄະແນນຕາມເກນ* | *ຄະແນນ (ຜົນໄດ້ຮັບ)* | *ຫຼັກຖານ* |
|---|---|---|---|---|
| **1**<br>ວິໄສທັດ, ເປົ້າໝາຍ, ພາລະກິດ ແລະການກໍ່ສ້າງຖືກກຳນົດຢ່າງຈະແຈ້ງແລະທຸກພາກສ່ວນໄດ້ຮັບຮູ້ | ວິໄສທັດ, ເປົ້າໝາຍ ແລະ ພາລະກິດ (VMG) ໄດ້ຖືກກຳນົດຂຶ້ນຢ່າງຈະແຈ້ງ. ເຜີຍແຜ່ຢ່າງກວ້າງຂວາງ ແລະ ເປັນສິ່ງຢ້ຳເຕືອນຄວາມຈຳໃຫ້ແກ່ຜູ້ທີ່ກ່ຽວຂ້ອງທັງຫຼາຍ ໂດຍສະເພາະແມ່ນພະນັກງານ ແລະ ນັກຮຽນ-ນັກສຶກສາຄູທຸກຄົນໃນຄະນະສຶກສາສາດ, ວິທະຍາໄລຄູ; ຜູ້ປົກຄອງ/ພໍ່ແມ່ຂອງນັກຮຽນ-ນັກສຶກສາຄູທຸກຄົນ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນ/ລະດັບຊາດ ໂດຍຜ່ານການຕິດຕໍ່ສື່ສານ ແລະ ໃນຮູບແບບຕ່າງໆທີ່ເປັນທາງການເປັນຕົ້ນແມ່ນ: ປຶ້ມ, ໂປສະເຕີ, ເວບໄຊ ແລະ ສື່ອື່ນໆ. | 5 | ***4*** | ຂໍ້ຕົກລົງວ່າດ້ວຍການນຳໃຊ້ວິໄສທັດ, ເວັບໄຊ... |
| | ***ວິໄສທັດ, ເປົ້າໝາຍ, ພາລະກິດ ແລະ (VMG) ໄດ້ຖືກກຳນົດຂຶ້ນຢ່າງຈະແຈ້ງ, ເຜີຍແຜ່ຢ່າງກວ້າງຂວາງ ແລະ ເປັນສິ່ງຢ້ຳເຕືອນຄວາມຈຳໃຫ້ແກ່ຜູ້ທີ່ກ່ຽວຂ້ອງທັງຫຼາຍ ໂດຍສະເພາະແມ່ນພະນັກງານ ແລະ ນັກຮຽນ-ນັກສຶກສາຄູທຸກຄົນໃນຄະນະສຶກສາສາດ, ວິທະຍາໄລຄູ ແລະ ຜູ້ປົກຄອງ/ພໍ່ແມ່ຂອງນັກຮຽນ-ນັກສຶກສາຄູຈຳນວນໜຶ່ງ ໂດຍຜ່ານການຕິດຕໍ່ສື່ສານ ແລະ ໃນຮູບແບບຕ່າງໆທີ່ເປັນທາງການເປັນຕົ້ນແມ່ນ: ປຶ້ມ, ໂປສະເຕີ, ເວບໄຊ ແລະ ສື່ອື່ນໆ.*** | 4 | | |
| | ວິໄສທັດ, ເປົ້າໝາຍ, ພາລະກິດ ແລະ (VMG) ໄດ້ຖືກກຳນົດຂຶ້ນຢ່າງຈະແຈ້ງ, ເຜີຍແຜ່ໃຫ້ແກ່ຄູອາຈານ ແລະ ນັກຮຽນ-ນັກສຶກສາໃນສະຖາບັນເປັນທີ່ຮູ້ຈັກ. | 3 | | |

| | | | | |
|---|---|---|---|---|
| | ວິໄສທັດ, ເປົ້າໝາຍ, ພາລະກິດ ແລະ ໄດ້ຖືກກຳນົດໄວ້ໃນເອກະສານ ແຕ່ບໍ່ມີການເຜີຍແຜ່ຢ່າງກວ້າງຂວາງ. ດັ່ງນັ້ນ ຈຶ່ງບໍ່ເປັນທີ່ຮູ້ຈັກຂອງຜູ້ທີ່ກ່ຽວຂ້ອງ. | 2 | | |
| | ວິໄສທັດ, ເປົ້າໝາຍ ແລະ ພາລະກິດບໍ່ໄດ້ກຳໜົດ | 1 | | |
| 2<br>ຈຸດໝາຍກໍ່ສ້າງສອດຄ່ອງກັບພາລະໜ້າທີ່, ແທດເໝາະກັບທ່າແຮງ ແລະທິດທາງການພັດທະນາຂອງສະຖາບັນ, ຕອບສະໜອງໄດ້ຕໍ່ຄວາມຮຽກຮ້ອງຕ້ອງການໃນການພັດທະນາຂອງປະເທດ, ທ້ອງຖິ່ນ, ການເຊື່ອມໂຍງກັບພາກພື້ນ ແລະການພັດທະນາດ້ານວິຊາການຂອງຂະແໜງການ | ການກຳນົດເປົ້າໝາຍຊັດເຈນມີຄວາມສອດຄ່ອງກັບພາລະບົດບາດ, ຄວາມສາມາດທີ່ບົ່ມຊ້ອນຢູ່ພາຍໃນ ແລະ ທິດທາງໃນອະນາຄົດຂອງຄະນະສຶກສາສາດ ແລະ ວິທະຍາໄລຄູ, ແນໃສ່ບັນລຸຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນລະດັບຊາດ, ລະດັບທ້ອງຖິ່ນ, ການເຊື່ອມໂຍງກັບພາກພື້ນ ແລະ ການພັດທະນາເປັນມືອາຊີບ. | 5 | ***3*** | ປື້ມ, ເວັບໄຊ... |
| | ການກຳນົດເປົ້າໝາຍມີຄວາມສອດຄ່ອງເປັນສ່ວນຫຼາຍກັບພາລະບົດບາດ, ຄວາມສາມາດທີ່ບົ່ມຊ້ອນຢູ່ພາຍໃນ ແລະ ທິດທາງໃນອະນາຄົດຂອງຄະນະສຶກສາສາດ ແລະວິທະຍາໄລຄູ, ແນໃສ່ບັນລຸຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນລະດັບຊາດ, ລະດັບທ້ອງຖິ່ນ, ການເຊື່ອມໂຍງກັບພາກພື້ນ ແລະ ການພັດທະນາເປັນມືອາຊີບ ແຕ່ຍັງບໍ່ທັນສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຕົວຈິງ. | 4 | | |
| | ***ການກຳນົດເປົ້າໝາຍມີຄວາມສອດຄ່ອງກັບພາລະບົດບາດ, ຄວາມສາມາດທີ່ບົ່ມຊ້ອນຢູ່ພາຍໃນ ແລະ ທິດທາງໃນອະນາຄົດຂອງຄະນະສຶກສາສາດ, ແນໃສ່ບັນລຸ ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນລະດັບຊາດ, ລະດັບທ້ອງຖິ່ນ, ການເຊື່ອມໂຍງກັບພາກພື້ນ ແລະ ການພັດທະນາເປັນມືອາຊີບ ແຕ່ຍັງມີຂອບເຂດຈຳກັດ.*** | 3 | | |
| | ການກຳນົດເປົ້າໝາຍບໍ່ສອດຄ່ອງກັບພາລະບົດບາດ, ຄວາມສາມາດທີ່ບົ່ມຊ້ອນຢູ່ພາຍໃນ ແລະ ທິດທາງໃນອະນາຄົດຂອງຄະນະສຶກສາສາດ ແລະວິທະຍາໄລຄູ, ແນໃສ່ບັນລຸຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາແຫ່ງຊາດ, ລະດັບທ້ອງຖິ່ນ, ການເຊື່ອມໂຍງກັບພາກພື້ນ ແລະ ການພັດທະນາດ້ານວິຊາຊີບ ແລະ ຄວາມຕ້ອງການທີ່ຈຳເປັນ; ຈະຕ້ອງໄດ້ຮັບການປ່ຽນແປງທັງໝົດ. | 2 | | |
| | ການກຳໜົດເປົ້າໝາຍບໍ່ມີ | 1 | | |
| 3<br>ວິໄສທັດ, ພາລະໜ້າທີ່ແລະຈຸດໝາຍການກໍ່ສ້າງໄດ້ຮັບການທົບ | ພາລະກິດໄດ້ມີການທົບທວນແລະປັບປຸງ, ແກ້ໄຂ 1 ຄັ້ງຕໍ່ປີ ໂດຍຜູ້ຕາງໜ້າຂອງທຸກພາກສ່ວນທີ່ກ່ຽວຂ້ອງ. | 5 | ***4*** | ປື້ມ, ເວັບໄຊ... |
| | ***ພາລະກິດໄດ້ມີການທົບທວນແລະປັບປຸງ, ແກ້ໄຂ ຢ່າງໜ້ອຍ 1 ຄັ້ງຕໍ່ 3 ປີໂດຍຜູ້ຕາງໜ້າຂອງທຸກພາກສ່ວນທີ່ກ່ຽວຂ້ອງ.*** | 4 | | |

| | | | | |
|---|---|---|---|---|
| ທວນແລະປັບປຸງເປັນແຕ່ລະໄລຍະ | ພາລະກິດໄດ້ມີການທົບທວນແລະປັບປຸງ, ແກ້ໄຂ 1 ຄັ້ງຕໍ່ 5 ປີເປັນປະຈຳ ໂດຍຜູ້ຕາງໜ້າຂອງທຸກພາກສ່ວນທີ່ກ່ຽວຂ້ອງ. | 3 | | |
| | ພາລະກິດໄດ້ມີການທົບທວນແລະປັບປຸງ, ແກ້ໄຂ 1 ຄັ້ງ ຕໍ່ 10 ປີ ໂດຍຜູ້ຕາງໜ້າຂອງທຸກພາກສ່ວນທີ່ກ່ຽວຂ້ອງ. | 2 | | |
| | ບໍ່ເຄີຍທົບທວນຄືນ ແລະ ປັບປຸງແກ້ໄຂພາລະກິດຈັກເທື່ອ. | 1 | | |

**ມາດຕະຖານທີ 2 ການຄຸ້ມຄອງ ແລະ ບໍລິຫານ**

ມີລະບົບການຄຸ້ມຄອງທີ່ດີໃນຄະນະສຶກສາສາດ, ສະຖາບັນ, ວິທະຍາໄລ ເຮັດໃຫ້ສາມາດບັນລຸຕາມວິໄສທັດ, ພາລະກິດ ແລະ ເປົ້າໝາຍຂອງສະຖາບັນຢ່າງມີປະສິດທິພາບ. ລະບົບການຄຸ້ມຄອງສະຖາບັນແມ່ນປະກອບທັງຄະນະຜູ້ບໍລິຫານ; ມີການສະແດງບົດບາດຂອງຄວາມເປັນຜູ້ນຳໃນການກຳນົດວິໄສທັດ, ພາລະກິດ ແລະ ເປົ້າໝາຍ; ກຳນົດບັນຫາບູລິມະສິດທີ່ຈະຕ້ອງໄດ້ຮັບການແກ້ໄຂ ແລະ ພັດທະນາແຜນຍຸດທະສາດ (ທີ່ນຳໄປປະຕິບັດໄດ້) ແລະ ແຜນແມ່ບົດສຳລັບການພັດທະນາສະຖາບັນ ໂດຍໃຫ້ສອດຄ່ອງກັບບັນດາ ດຳລັດ/ຂໍ້ຕົກລົງ ແລະ ລະບຽບການທີ່ມີຢູ່ແລ້ວ.

| *ຕົວຊີ້ວັດ* | *ເກນໃຫ້ຄະແນນ* | *ຄະແນນຕາມເກນ* | *ຄະແນນ (ຜົນໄດ້ຮັບ)* | *ຫຼັກຖານ* |
|---|---|---|---|---|
| 4<br>ສະພາບໍລິຫານມີບົດບາດແລະປະຕິບັດໜ້າທີ່ຮັບຜິດຊອບທີ່ໄດ້ກຳນົດໄວ້ໂດຍສອດຄ່ອງກັບບັນດາດຳລັດແລະລະບຽບການທີ່ມີຢູ່ | ສະພາບໍລິຫານໄດ້ກຳໜົດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບເປັນລາຍລັກອັກສອນ, ເປັນທີ່ຮັບຮູ້ຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ການປະຕິບັດໜ້າທີ່ຂອງສະພາບໍລິຫານສອດຄ່ອງກັບບັນດາດຳລັດ ແລະ ລະບຽບການທີ່ມີຢູ່ແລ້ວ. | 5 | *4* | ຂໍ້ຕົກລົງແລະວາລະກອງປະຊຸມປະຈຳປີຂອງ ວຄສ |
| | ***ສະພາບໍລິຫານໄດ້ກຳໜົດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບເປັນລາຍລັກອັກສອນ, ເປັນທີ່ຮັບຮູ້ຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ການ ປະຕິບັດໜ້າທີ່ຂອງສະພາບໍລິຫານໄດ້ພຽງບາງສ່ວນທີ່ສອດຄ່ອງກັບບັນດາດຳລັດ ແລະ ລະບຽບການທີ່ມີຢູ່ແລ້ວ.*** | 4 | | |
| | ສະພາບໍລິຫານໄດ້ກຳໜົດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບເປັນລາຍລັກອັກສອນ, ເປັນທີ່ຮູ້ຈັກຂອງບາງພາກສ່ວນທີ່ກ່ຽວຂ້ອງ ແລະ ການປະຕິບັດຫນ້າທີ່ຂອງສະພາບໍລິຫານ ບາງສ່ວນບໍ່ສອດຄ່ອງກັບບັນດາດຳລັດ ແລະ ລະບຽບການທີ່ມີຢູ່ແລ້ວ. | 3 | | |

| | | | | |
|---|---|---|---|---|
| | ສະພາບໍລິຫານໄດ້ກຳໜົດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບເປັນລາຍລັກອັກສອນ, ແຕ່ບໍ່ເປັນທີ່ຮູ້ຈັກຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ການປະຕິບັດໜ້າທີ່ຂອງສະພາບໍລິຫານ ບາງສ່ວນບໍ່ສອດຄ່ອງກັບບັນດາດຳລັດ ແລະ ລະບຽບການທີ່ມີຢູ່ແລ້ວ. | 2 | | |
| | ສະພາບໍລິຫານບໍ່ໄດ້ຖືກກຳໜົດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບເປັນລາຍລັກອັກສອນ ແລະ ບໍ່ເປັນທີ່ຮູ້ຈັກຂອງທຸກພາກສ່ວນທີ່ກ່ຽວຂ້ອງ | 1 | | |
| 5<br>ໂຄງຮ່າງການຈັດຕັ້ງແລະມີການບັນຈຸພະນັກງານທີ່ມີວຸດທິເໝາະສົມແລະມີຄວາມສາມາດເຂົ້າໃນທຸກຕຳແໜ່ງງານທີ່ຖືກສ້າງຕັ້ງຂຶ້ນ | ໂຄງຮ່າງການຈັດຕັ້ງມີການກຳນົດໜ້າວຽກຕາມຕຳແໜ່ງງານຢ່າງ ຈະແຈ້ງ, ໄດ້ບັນຈຸພະນັກງານທີ່ມີຄຸນນະພາບ ແລະ ມີຄວາມສາມາດໃນບັນດາຕຳແໜ່ງບໍລິຫານໄດ້ 100%. | 5 | *4* | ຂໍ້ຕົກລົງການບັນຈຸສັບຊ້ອນພະນັກງານ |
| | ***ໂຄງຮ່າງການຈັດຕັ້ງມີການກຳນົດໜ້າວຽກຕາມຕຳແໜ່ງງານຢ່າງ ຈະແຈ້ງ, ໄດ້ບັນຈຸພະນັກງານທີ່ມີຄຸນນະພາບ ແລະ ມີຄວາມສາມາດໃນບັນດາຕຳແໜ່ງບໍລິຫານໄດ້ 80%.*** | 4 | | |
| | ໂຄງຮ່າງການຈັດຕັ້ງມີການກຳນົດໜ້າວຽກຕາມຕຳແໜ່ງງານຢ່າງ ຈະແຈ້ງ, ໄດ້ບັນຈຸພະນັກງານທີ່ມີຄຸນນະພາບ ແລະ ມີຄວາມສາມາດໃນບັນດາຕຳແໜ່ງບໍລິຫານໄດ້ 60%. | 3 | | |
| | ໂຄງຮ່າງການຈັດຕັ້ງມີການກຳນົດໜ້າວຽກຕາມຕຳແໜ່ງງານຢ່າງ ຈະແຈ້ງ, ໄດ້ບັນຈຸພະນັກງານທີ່ມີຄຸນນະພາບ ແລະ ມີຄວາມສາມາດໃນບັນດາຕຳແໜ່ງບໍລິຫານໄດ້ 40%. | 2 | | |
| | ໂຄງຮ່າງການຈັດຕັ້ງບໍ່ໄດ້ຖືກຂຽນອອກ, ບໍ່ມີການກຳນົດຈະແຈ້ງກ່ຽວກັບໜ້າວຽກຕາມຕຳແໜ່ງງານ ແລະ ມາດຕະຖານທາງດ້ານວຸດທິການສຶກສາ. | 1 | | |
| 6<br>ມີແຜນຍຸດທະສາດພັດທະນາແຕ່ລະໄລຍະທີ່ສອດຄ່ອງກັບວິໄສທັດ, ພາລະໜ້າທີ່ແລະຈຸດໝາຍການກໍ່ສ້າງທີ່ໄດ້ກຳນົດໄວ້ | ແຜນຍຸດທະສາດໄດ້ກຳໜົດແຜນການພັດທະນາສະຖາບັນຢ່າງຈະແຈ້ງ  ໂດຍສອດຄ່ອງກັບວິໄສທັດ, ພາລະກິດ ແລະ ເປົ້າໝາຍຂອງສະຖາບັນທີ່ໄດ້ກຳນົດໄວ້. ມີການເຜີຍແຜ່ ແລະ ຈັດຕັ້ງປະຕິບັດໄດ້ຢ່າງເຕັມສ່ວນ. | 5 | *4* | - ແຜນຍຸດທະສາດຂອງແຂວງ<br>- ແຜນພັດທະນາ 5 ປີ ຂອງ ວຄສ |
| | ***ແຜນຍຸດທະສາດໄດ້ກຳໜົດແຜນການພັດທະນາສະຖາບັນຢ່າງຈະແຈ້ງ  ໂດຍສອດຄ່ອງກັບວິໄສທັດ, ພາລະກິດ ແລະ ເປົ້າໝາຍຂອງສະຖາບັນທີ່ໄດ້ກຳນົດໄວ້. ມີການເຜີຍແຜ່ ແລະ ຈັດຕັ້ງປະຕິບັດໄດ້ເປັນສ່ວນຫຼາຍ.*** | 4 | | |
| | ແຜນຍຸດທະສາດໄດ້ກຳໜົດແຜນການພັດທະນາສະຖາບັນຢ່າງຈະແຈ້ງ  ໂດຍສອດຄ່ອງກັບວິໄສທັດ, ພາລະກິດ ແລະ ເປົ້າໝາຍຂອງສະຖາບັນທີ່ໄດ້ກຳນົດໄວ້. ມີການເຜີຍແຜ່ ແລະ ຈັດຕັ້ງປະຕິບັດໄດ້ສ່ວນໜ້ອຍ. | 3 | | |
| | ແຜນຍຸດທະສາດໄດ້ກຳໜົດແຜນການພັດທະນາສະຖາບັນ, ແຕ່ແຜນການບໍ່ສອດຄ່ອງກັບວິໄສທັດ, ພາລະກິດ ແລະ ເປົ້າໝາຍຂອງສະຖາບັນທີ່ໄດ້ກຳນົດໄວ້ ແລະ ການປະຕິບັດເກືອບຈະບໍ່ມີເລີຍ. | 2 | | |

| | | | | |
|---|---|---|---|---|
| | ແຜນຍຸດທະສາດການພັດທະນາສະຖາບັນ ບໍ່ໄດ້ກຳໜົດ | 1 | | |
| 7<br>ມີນະໂຍບາຍ, ລະບຽບການແລະຂັ້ນຕອນການຄຸ້ມຄອງ-ບໍລິຫານພະນັກງານຂັ້ນຕ່າງໆທີ່ຈະແຈ້ງ | ນະໂຍບາຍ, ລະບຽບການແລະການຄຸ້ມຄອງ-ບໍລິຫານພະນັກງານ<br>ມີຂັ້ນຕອນທີ່ແນ່ນອນຊັດເຈນ ແລະ ຈະແຈ້ງ, ມີການດຳເນີນງານແລະຈັດຕັ້ງປະຕິບັດໄດ້ເປັນຢ່າງດີ. | 5 | *4* | -ເອກະສານນະໂຍບາຍ<br>- ລະບຽບການຄຸ້ມຄອງພະນັກງານ<br>-ບົດບັນທຶກສ່ອງແສງໃນແຕ່ລະອາທິດ |
| | ***ນະໂຍບາຍ, ລະບຽບການ ແລະ ການຄຸ້ມຄອງ-ບໍລິຫານພະນັກງານ ມີຂັ້ນຕອນທີ່ແນ່ນອນຊັດເຈນ ແລະ ຈະແຈ້ງ, ມີການດຳເນີນງານ ແລະ ຈັດຕັ້ງປະຕິບັດໄດ້ເປັນຢ່າງດີ, ແຕ່ສິ່ງເຫຼົ່ານີ້ບໍ່ທັນສອດຄ່ອງຢ່າງເຕັມສ່ວນ ແລະ ຈັດຕັ້ງປະຕິບັດໄດ້ສ່ວນຫຼາຍ.*** | 4 | | |
| | ນະໂຍບາຍ, ລະບຽບການແລະການຄຸ້ມຄອງ-ບໍລິຫານພະນັກງານ<br>ມີຂັ້ນຕອນທີ່ແນ່ນອນຊັດເຈນ ແລະ ຈະແຈ້ງ, ມີການດຳເນີນງານແລະຈັດຕັ້ງປະຕິບັດໄດ້ເປັນຢ່າງດີ, ແຕ່ສິ່ງເຫຼົ່ານີ້ບໍ່ທັນສອດຄ່ອງຢ່າງເຕັມສ່ວນ ແລະ ຈັດຕັ້ງປະຕິບັດໄດ້ພຽງບາງສ່ວນ. | 3 | | |
| | ນະໂຍບາຍ, ລະບຽບການແລະການຄຸ້ມຄອງ-ບໍລິຫານພະນັກງານ<br>ມີຂັ້ນຕອນທີ່ແນ່ນອນຊັດເຈນ ແລະ ຈະແຈ້ງ, ມີການດຳເນີນງານແລະຈັດຕັ້ງປະຕິບັດໄດ້ເປັນຢ່າງດີ, ແຕ່ບໍ່ທັນມີລະບຽບການສະເພາະ ແລະ ຂັ້ນຕອນເພື່ອປະຕິບັດ. | 2 | | |
| | ນະໂຍບາຍ, ລະບຽບການ ແລະ ຂັ້ນຕອນດຳເນີນງານກ່ຽວກັບການຄຸ້ມຄອງພະນັກງານບໍ່ໄດ້ດຳເນີນແລະຈັດຕັ້ງປະຕິບັດ. | 1 | | |
| 8<br>ມີນະໂຍບາຍ, ລະບຽບການແລະຂັ້ນຕອນການບໍລິຫານດ້ານການເງິນທີ່ໂປ່ງໃສ | ນະໂຍບາຍ, ລະບຽບການ ແລະຂັ້ນຕອນການບໍລິຫານດ້ານການເງິນໂປ່ງໃສ ສາມາດກວດສອບໄດ້, ມີການເຜີຍແຜ່ຢ່າງກວ້າງຂວາງ ແລະ ເປັນປົກກະຕິ. | 5 | *4* | -ເອກະສານການຂຶ້ນງົບປະມານປະຈຳປີ<br>-ແຜນນະໂຍບາຍການເງິນ<br>-ບົດສະຫຼຸບກ່ຽວກັບການເງິນ |
| | ***ນະໂຍບາຍ, ລະບຽບການ ແລະຂັ້ນຕອນການບໍລິຫານດ້ານການເງິນໂປ່ງໃສ ສາມາດກວດສອບໄດ້, ມີການເຜີຍແຜ່ຢ່າງກວ້າງຂວາງ ແລະ  ມີການເຜີຍແຜ່ແຕ່ບໍ່ເປັນປົກກະຕິ.*** | *4* | | |
| | ນະໂຍບາຍ, ລະບຽບການ ແລະຂັ້ນຕອນການບໍລິຫານດ້ານການເງິນບໍ່ມີຄວາມຈະແຈ້ງ, ກວດສອບຄ້ອນຂ້າງຍາກ ແລະ ບໍ່ມີການເຜີຍແຜ່ຢ່າງກວ້າງຂວາງ. | 3 | | |
| | ນະໂຍບາຍ, ລະບຽບການ ແລະຂັ້ນຕອນການບໍລິຫານດ້ານການເງິນບໍ່ມີຄວາມຈະແຈ້ງ, ກວດສອບຍາກ ແລະ ບໍ່ມີການເຜີຍແຜ່ຢ່າງກວ້າງຂວາງ. | 2 | | |
| | ນະໂຍບາຍ, ລະບຽບການ ແລະ ຂັ້ນຕອນການບໍລິຫານຄຸ້ມຄອງທາງດ້ານການເງິນບໍ່ມີ. | 1 | | |

| | | | | |
|---|---|---|---|---|
| 9<br>ມີຖານະດ້ານການເງິນທີ່ຍືນຍົງ ແລະໝັ້ນຄົງ | ***ສະພາບການເງິນຂອງສະຖາບັນ ມີງົບປະມານປົກກະຕິ ໃນການສະໜັບສະໜູນການດຳເນີນງານຕາມກຳນົດການ (ງວດ) ໃນແຕ່ລະສົກຮຽນ ໄດ້ທັນ 4 ງວດຢ່າງເປັນປົກກະຕິ.*** | 5 | ***5*** | ບົດສະຫຼຸບກ່ຽວກັບການເງິນ |
| | ສະພາບການເງິນຂອງສະຖາບັນ ມີງົບປະມານປົກກະຕິ ໃນການສະໜັບສະໜູນການດຳເນີນງານຕາມກຳນົດການ (ງວດ) ໃນແຕ່ລະສົກຮຽນ, ໄດ້ທັນແຕ່ 4 ງວດແຕ່ປົກກະຕິ. | 4 | | |
| | ສະພາບການເງິນຂອງສະຖາບັນ ມີງົບປະມານປົກກະຕິ ໃນການສະໜັບສະໜູນການດຳເນີນງານຕາມກຳນົດການ (ງວດ) ໃນແຕ່ລະສົກຮຽນ, ໄດ້ທັນແຕ່ 2 ງວດ. | 3 | | |
| | ສະພາບການເງິນຂອງສະຖາບັນ ມີງົບປະມານປົກກະຕິ ໃນການສະໜັບສະໜູນການດຳເນີນງານຕາມກຳນົດການ (ງວດ) ໃນແຕ່ລະສົກຮຽນ, ໄດ້ທັນແຕ່ 1 ງວດ. | 2 | | |
| | ສະພາບການເງິນຂອງສະຖາບັນ ມີງົບປະມານປົກກະຕິ ໃນການສະໜັບສະໜູນການດຳເນີນງານຕາມກຳນົດການ (ງວດ) ໃນແຕ່ລະສົກຮຽນ, ບໍ່ທັນຈັກງວດ. | 1 | | |

**ມາດຕະຖານທີ 3 ການພັດທະນາບຸກຄະລາກອນ (ອີງຕາມການສ້າງແຜນບັນຈຸ ແລະ ການນຳໃຊ້ຄູປະຈຳປີ ແລະ ການຕິດຕາມ-ປະເມີນຜົນການປະຕິບັດໜ້າທີ່ຂອງຄູ)**

ການຄັດເລືອກ ແລະ ບັນຈຸ, ການຈັດສັນ, ການຮັກສາໄວ້ ແລະ ການສະໜັບສະໜູນຊ່ວຍເຫຼືອຄູໃຫ້ມີການພັດທະນາກາຍເປັນຄູມືອາຊີບຢ່າງຕໍ່ເນື່ອງ; ຄູສອນແມ່ນບຸກຄະລາກອນທີ່ສຳຄັນທີ່ສຸດຂອງຄະນະສຶກສາສາດ, ສະຖາບັນສ້າງຄູ, ວິທະຍາໄລຄູທຸກແຫ່ງ. ຄວາມຮັບຜິດຊອບຕົ້ນຕໍຂອງຄູສອນ ແມ່ນການບັນລຸຄຸນນະພາບໃນການດຳເນີນການສອນຕາມຫຼັກສູດ. ເພື່ອເຮັດໜ້າທີ່ດັ່ງກ່າວ, ຄູສອນຕ້ອງມີວຸດທິການສຶກສາທີ່ເໝາະສົມ, ມີຈັນຍາບັນ, ມີຄວາມຮູ້ທີ່ກ່ຽວຂ້ອງ ແລະ ມີຄວາມສາມາດ, ມີຄວາມຮູ້ສຶກຮັບຜິດຊອບໃນຖານະທີ່ເປັນຄູ, ມີປະສົບການໃນການສິດສອນ ແລະ ມີສຸຂະພາບແຂງແຮງດີ. ພະນັກງານປະຈຳການເຕັມເວລາຂອງຫ້ອງການສາຍ/ພາກວິຊາຈະຕ້ອງມີສັດສ່ວນຫຼາຍສົມຄວນ ເພື່ອຮັບປະກັນການສິດສອນໃຫ້ມີປະສິດທິພາບ ແລະ ເພື່ອແນະນຳນັກຮຽນ-ນັກສຶກສາ. ພະນັກງານຂອງຫ້ອງການສາຍ/ພາກວິຊາຕ້ອງໄດ້ຮັບມອບໝາຍໃຫ້ສິດສອນໃນສາຍວິຊາສະເພາະທີ່ເຂົາເຈົ້າມີຄວາມຊຳນານ, ລວມທັງການກະກຽມບົດສອນ . ສະຖາບັນຕ້ອງມີເງື່ອນໄຂຢ່າງຈະແຈ້ງແນ່ນອນກ່ຽວກັບການຈັດລຽງລຳດັບການບັນຈຸ, ການເລື່ອນຂັ້ນ ແລະ ການດຳລົງຕຳແໜ່ງຂອງພະນັກງານ. ການບັນຈຸຄູສອນເພດຍິງ ແລະ ຜູ້ທີ່ມາຈາກເຂດຊົນເຜົ່າ ຕ້ອງໄດ້ຮັບການສືບຕໍ່ຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸເປົ້າໝາຍດ້ານຄວາມດຸ່ນດ່ຽງກັນລະຫວ່າງເພດ ແລະ ຄວາມຫຼາກຫຼາຍ ໃນບັນດາຄູສອນ.

| *ຕົວຊີ້ວັດ* | *ເກນໃຫ້ຄະແນນ* | *ຄະແນນຕາມເກນ* | *ຄະແນນ (ຜົນໄດ້ຮັບ)* | *ຫຼັກຖານ* |
|---|---|---|---|---|
| 10<br>ມີກົນໄກການຄັດເລືອກ, ບັນຈຸແລະ | ມີຄູສອນພຽງພໍຕາມການກຳນົດ ພຽບພ້ອມດ້ວຍວຸດທິການສຶກສາ, ມີຂະບວນການ ແລະ ຂັ້ນຕອນໃນການບັນຈຸຄູທີ່ເໝາະສົມທີ່ສຸດ ຊຶ່ງເປັນໄປຕາມແຜນບັນຈຸ ແລະ ນຳໃຊ້ຄູ | 5 | ***4*** | -ເອກະສານປະເມີນຄູໃໝ່ |

| | | | | |
|---|---|---|---|---|
| ຊັບຊ້ອນບຸກຄະລາກອນທີ່ຈະແຈ້ງ ແລະສອດຄ່ອງຕາມຄວາມຕ້ອງການ ແລະແຜນພັດທະນາຂອງຕົນ | ***ມີຄູສອນພຽງພໍຕາມການກຳນົດ, ແຕ່ມີພຽງບາງສ່ວນຂອງການບັນຈຸເທົ່ານັ້ນ ທີ່ຍັງບໍ່ທັນສອດຄ່ອງກັບຄູ່ມືແນະນຳການສ້າງແຜນການບັນຈຸ ແລະ ນຳໃຊ້ຄູປະຈຳປີ*** | 4 | | -ຂໍ້ຕົກລົງສອບເສັງຄັດເລືອກ<br>-ແຈ້ງການຕົວເລກແບ່ງປັນ ການບັນຈຸຄູໃໝ່ |
| | ມີຄູສອນພຽງພໍຕາມການກຳນົດ, ແຕ່ການບັນຈຸດັ່ງກ່າວບໍ່ສອດຄ່ອງກັບຄູ່ມືແນະນຳການສ້າງແຜນການບັນຈຸ ແລະ ນຳໃຊ້ຄູປະຈຳປີ | 3 | | |
| | ມີຄູສອນພຽງພໍຕາມການກຳນົດ, ແຕ່ການບັນຈຸຍັງບໍ່ສອດຄ່ອງຕາມຄວາມຕ້ອງການ | 2 | | |
| | ມີຄູສອນບໍ່ພຽງພໍຕາມການກຳນົດ | 1 | | |
| 11<br>ອາຈານສອນມີວຸດທິແລະຄວາມສາມາດທີ່ເໝາະສົມ | ຄູສອນທຸກຄົນທີ່ສອນໃນແຕ່ລະຫຼັກສູດ ມີວຸດທິການສຶກສາສູງກວ່າລະດັບທີ່ເຂົາເຈົ້າສອນ (ຍົກເວັ້ນຄູສອນພາກປະຕິບັດຕົວຈິງ) | 5 | ***3*** | ສະຖິຕິ ແລະ ລາຍຊື່ຄູ-ອາຈານສອນ |
| | ຫຼາຍກວ່າ 90% ຂອງຄູສອນທີ່ສອນໃນແຕ່ລະຫຼັກສູດ ມີວຸດທິການສຶກສາສູງກວ່າລະດັບທີ່ເຂົາເຈົ້າສອນ (ຍົກເວັ້ນຄູສອນພາກປະຕິບັດຕົວຈິງ) | 4 | | |
| | ***ຫຼາຍກວ່າ 50% ຂອງຄູສອນທີ່ສອນໃນແຕ່ລະຫຼັກສູດ ມີວຸດທິການສຶກສາສູງກວ່າລະດັບທີ່ເຂົາເຈົ້າສອນ (ຍົກເວັ້ນຄູສອນພາກປະຕິບັດຕົວຈິງ)*** | 3 | | |
| | ຄູສອນທີ່ສອນໃນແຕ່ລະຫຼັກສູດ ມີວຸດທິການສຶກສາຕ່ຳກວ່າລະດັບທີ່ເຂົາເຈົ້າສອນ | 2 | | |
| | ມີຄູສອນບໍ່ພຽງພໍຕາມການກຳນົດ | 1 | | |
| 12<br>ອາຈານສອນມີຄວາມສາມາດໃນການຖ່າຍທອດຄວາມຮູ້ຄວາມສາມາດຕາມຫຼັກສູດຢ່າງເຂັ້ມງວດ | ໄດ້ນຳໃຊ້ຄະແນນສະເລ່ຍຕາມຕົວຊີ້ບອກຂອງການປະເມີນຜົນງານຂອງລັດຖະກອນຄູ (ສະບັບເດືອນທັນວາ 2013 ຫຼື ສະບັບປັບປຸງໃໝ່ທີ່ປ່ຽນແທນສະບັບທີ່ເຄີຍນຳໃຊ້ຜ່ານມາ). ຄະແນນສະເລ່ຍຂອງຂໍ້ III. ດ້ານຈັນຍາບັນ, ຂໍ້ IV. ດ້ານວິຊາຊີບ, ຂໍ້ VI. ດ້ານການພັດທະນາຕົນເອງ ແມ່ນ 4.0 | 5 | ***4*** | ໃບປະເມີນຄູປະຈຳປີ |
| | ***ຄະແນນສະເລ່ຍຂອງຂໍ້ III. ດ້ານຈັນຍາບັນ, IV. ດ້ານວິຊາຊີບ, VI. ດ້ານການພັດທະນາຕົນເອງ ແມ່ນ 3.50 ຫາ 3.99*** | 4 | | |
| | ຄະແນນສະເລ່ຍຂອງຂໍ້ III. ດ້ານຈັນຍາບັນ, IV. ດ້ານວິຊາຊີບ, VI. ດ້ານການພັດທະນາຕົນເອງ ແມ່ນ 2.00 ຫາ 3.49 | 3 | | |
| | ຄະແນນສະເລ່ຍຂອງຂໍ້ III. ດ້ານຈັນຍາບັນ, IV. ດ້ານວິຊາຊີບ, VI. ດ້ານການພັດທະນາຕົນເອງ ຕ່ຳກວ່າ 2.00 | 2 | | |

| | | | | |
|---|---|---|---|---|
| | ບໍ່ໄດ້ນໍາໃຊ້ຄະແນນສະເລ່ຍຕາມຕົວຊີ້ບອກຂອງການປະເມີນຜົນງານຂອງລັດຖະກອນຄູ | 1 | | |
| 13<br>ຈໍານວນອາຈານສອນຕ້ອງພຽງພໍໃນການຈັດຕັ້ງປະຕິບັດຫຼັກສູດແລະສອດຄ່ອງກັບຈໍານວນນັກສຶກສາ. | ***ສະຖາບັນມີແຜນການພັດທະນາຊັບພະຍາກອນມະນຸດໃຫ້ພຽງພໍ. ຢ່າງໜ້ອຍ 40% ຂອງຈໍານວນຄູສອນ ແລະ ພະນັກງານບໍລິຫານໄດ້ເຂົ້າຮ່ວມຍົກລະດັບ ແລະ ຝຶກອົບຮົມການສອນ.*** | ***5*** | ***5*** | - ສະຖິຕິພະນັກງານຮຽນຕໍ່<br>- ຂໍ້ຕົກລົງ ຈັດເຝິກອົບຮົມຄູ |
| | ສະຖາບັນມີແຜນການພັດທະນາຊັບພະຍາກອນມະນຸດໃຫ້ພຽງພໍ. ຢ່າງໜ້ອຍ 30% ຂອງຈໍານວນຄູສອນ ແລະ ພະນັກງານບໍລິຫານໄດ້ເຂົ້າຮ່ວມຍົກລະດັບ ແລະ ຝຶກອົບຮົມ. | 4 | | |
| | ສະຖາບັນມີແຜນການພັດທະນາຊັບພະຍາກອນມະນຸດທີ່ຈະແຈ້ງ. ຢ່າງໜ້ອຍ 15% ຂອງຈໍານວນຄູສອນ ແລະ ພະນັກງານບໍລິຫານໄດ້ເຂົ້າຮ່ວມຍົກລະດັບ ແລະ ຝຶກອົບຮົມການສອນ. | 3 | | |
| | ສະຖາບັນມີແຜນການພັດທະນາຊັບພະຍາກອນມະນຸດໃຫ້ພຽງພໍ. ບໍ່ເຖິງ 15% ຂອງຈໍານວນຄູສອນ ແລະ ພະນັກງານບໍລິຫານໄດ້ເຂົ້າຮ່ວມຍົກລະດັບ ແລະ ຝຶກອົບຮົມ. | 2 | | |
| | ສະຖາບັນມີແຜນການພັດທະນາຊັບພະຍາກອນມະນຸດໃຫ້ພຽງພໍ. ບໍ່ເຖິງ 10% ຂອງຈໍານວນຄູສອນ ແລະ ພະນັກງານບໍລິຫານໄດ້ເຂົ້າຮ່ວມຍົກລະດັບ ແລະ ຝຶກອົບຮົມ. | 1 | | |
